# ການຈັດຕັ້ງປະຕິບັດກິດຈະກຳຂອງອາສາສະໝັກ ນັກສຶກສາກົດໝາຍ ໃນການສະໜັບສະໜູນຊຸມຊົນເຮັດປ່າສະຫງວນຂອງບ້ານ ຢູ່ບ້ານນາຢາງໃຕ ເມືອງນ້ຳບາກ ແຂວງຫລວງພະບາງ





ການຍ່າງສຳຫຼວດເຂດປ່າສະຫງວນຂອງບ້ານ ນາຍາງໃຕ້. ພາບໂດຍ ກຸ່ມອາສາສະໝັກໂຄງການໄລຟ໌

**ກໍລະນີສຶກສາປະກອບຈາກໂຄງການໄລຟ໌**

ຂຽນໂດຍ

ນ້ຳທິບເກສອນ ບຸດຕະສິງ, ທີ່ປຶກສາອິດສະຫຼະ

ຮ່ວມຂຽນໂດຍທີມງານໂຄງການໄລຟ໌:  ແພງໄຊ ຄາຄຳໄຊ, ກອງເດຍ ຢາງ, ເລນາ ວິໄລເພັດ

ເດືອນ ກັນຍາ, ປີ 2024

ສາລະບານ

ຄຳຂອບໃຈ ..... 2
ຄວາມເປັນມາໂດຍລວມ..... 3
1.1. ນຳສະເໜີກໍລະນີສຶກສາ ແລະ ພື້ນທີ່ເກັບກຳຂໍ້ມູນ..... 4
A. ກໍລະນີສຶກສາ..... 4
B. ວິທີການ ແລະ ເຄື່ອງມືໃນການເກັບກຳຂໍ້ມູນ ໂດຍລວມມີດັ່ງນີ້:..... 4
C. ຈຳນວນຜູ້ເຂົ້າຮ່ວມການສຳພາດ..... 5
1.2. ພື້ນທີ່ເກັບກຳຂໍ້ມູນ..... 6
2. ກິດຈະກຳທີ່ຈັດຕັ້ງປະຕິບັດໂດຍອາສາສະໝັກນັກສຶກສາກົດໝາຍ ..... 9
2.1. ການເກັບກຳຂໍ້ມູນກ່ຽວກັບການປ່ຽນແປງທາງດ້ານຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ ..... 9
2.2. ການເຜີຍແຜ່ຂໍ້ມູນກົດໝາຍກ່ຽວກັບທີ່ດິນ ແລະຊັບພະຍາກອນທຳມະຊາດ..... 10
2.3. ການກຳນົດ ແລະ ສ້າງປ່າສະຫງວນຂອງບ້ານ ..... 11
2.3.1. ການມີສ່ວນຮ່ວມຂອງຊາວບ້ານໃນການກຳນົດ ແລະ ສ້າງປ່າສະຫງວນຂອງບ້ານ ນາຍາງໃຕ້..... 12
3. ການປ່ຽນແປງທີ່ເກີດຂຶ້ນໃນຊຸມຊົນຜົນຈາກການມີສ່ວນຮ່ວມຂອງກິດຈະກຳອາສາສະໝັກນັກສຶກສາກົດໝາຍ ..... 13
3.1. ການປ່ຽນແປງທີ່ເກີດຂຶ້ນໃນຊຸມຊົນຈາກການປະຕິບັດກິດຈະກຳຄັ້ງທີ່ໜຶ່ງ..... 13
3.2. ການປ່ຽນແປງທີ່ເກີດຂຶ້ນໃນຊຸມຊົນຈາກການປະຕິບັດກິດຈະກຳຄັ້ງທີ່ສອງ ..... 14
3.3. ການປ່ຽນແປງທີ່ເກີດຂຶ້ນໃນຊຸມຊົນຈາກການປະຕິບັດກິດຈະກຳຄັ້ງທີ່ 3 ..... 17
3.4. ກົດລະບຽບການຄຸ້ມຄອງນຳໃຊ້ທີ່ດິນ ແລະປ່າໄມ້ຂັ້ນບ້ານ..... 18
3.5. ການປະຕິບັດທີ່ໄດ້ຜົນດີໃນການເຂົ້າເຖິງທີ່ດິນຂອງຊາວບ້ານ ໄດ້ມີການປັບປຸງດີຂຶ້ນໂດຍການມີສ່ວນຮ່ວມຜ່ານການເຮັດກິດຈະກຳຂອງອາສາສະໝັກນັກສຶກສາກົດໝາຍ..... 19
4. ຂັ້ນຕອນການສ້າງປ່າສະຫງວນຂອງບ້ານ..... 24
4.1. ຂັ້ນຕອນການສ້າງປ່າສະຫງວນຂອງບ້ານ ນາຍາງໃຕ້..... 24
5. ສະຫຼຸບລວມ ..... 26
6. ບົດຮຽນທີ່ຖອດຖອນໄດ້ ..... 27
7. ຂໍ້ສະເໜີສຳລັບຂັ້ນຕອນຕໍ່ໄປ..... 28

# ຄຳຂອບໃຈ



ການສຶກສາຄັ້ງນີ້ ຈະບໍ່ສາມາດບັນລຸຕາມເປົ້າໝາຍໄດ້ຫາກປາສະຈາກການຮ່ວມມື ແລະການແລກປ່ຽນປະສົບການຈາກຊາວບ້ານນາຍາງໃຕ້, ເມືອງນໍ້າບາກ, ແຂວງ ຫຼວງພະບາງ. ສະນັ້ນ, ຂ້າພະເຈົ້າຂໍຂອບໃຈໃນການຮ່ວມມື ແລະການຕ້ອນຮັບດ້ວຍຄວາມອົບອຸ່ນ, ດ້ວຍສຽງຫົວ ແລະຮອຍຍິ້ມຈາກແມ່ຍິງ ແລະ ຊາຍ; ຈາກເດັກນ້ອຍ, ຜູ້ໃຫຍ່ ແລະຜູ້ເຖົ້າຜູ້ແກ່. ຂໍຂອບໃຈທີມອາສາສະໝັກນັກສຶກສາກົດໝາຍທີ່ແລກປ່ຽນບົດຮຽນຮູ້ ແລະຄວາມຮູ້ສຶກ. ຂໍຂອບໃຈຫຼາຍໆນຳນ້ອງຢ່າຢົວ ຢ່າງ ທີ່ຊ່ວຍນຳພາ ແລະແປພາສາມົ້ງໃນເວລາສຳພາດ, ຂໍ ຂອບໃຈຄູຝຶກຈາກໂຄງການສົ່ງເສີມການຮຽນຮູ້ກ່ຽວກັບທີ່ດິນເພື່ອເພີ່ມຄວາມໝັ້ນຄົງທາງດ້ານສະບຽງອາຫານ ທີ່ຄອຍໃຫ້ການຊ່ວຍເຫຼືອໃນເວລາລົງສຳພາດຢູ່ຂັ້ນບ້ານ ແລະ ພ້ອມໃຫ້ຂໍ້ມູນທີ່ຕ້ອງການ. ຂໍຂອບໃຈມາຍັງການຈັດຕັ້ງບ້ານທີ່ສະຫຼະເວລາໃນການໃຫ້ຂໍ້ມູນຕາມທີ່ຕ້ອງການ, ຂໍຂອບໃຈວິຊາການຈາກທາງຂັ້ນເມືອງໂດຍສະເພາະແມ່ນຫ້ອງການຊັບ ແລະ ຫ້ອງວ່າການເມືອງນໍ້າບາກ ໃນການສະໜອງຂໍ້ມູນ ແລະເປີດໃຈໃນການໂອ້ລົມກ່ຽວກັບຂະບວນການ, ຂັ້ນຕອນ ແລະ ການເຮັດວຽກຮ່ວມກັບໂຄງການໄລຟ໌. ຂໍຂອບໃຈອີກຄັ້ງ ມາຍັງທາງຄະນະກຳມະການຄຸ້ມຄອງປ່າສະຫງວນຂອງບ້ານນາຍາງໃຕ້ ທີ່ໃຫ້ຄອຍໃຫ້ຂໍ້ ມູນ, ຄວາມຄິດເຫັນຕໍ່ ກັບວຽກງານການຈັດຕັ້ງປະຕິບັດ ກິດຈະກຳຂອງນ້ອງໆ ອາສາສະໝັກນັກສຶກສາກົດໝາຍຈາກໂຄງການໄລຟ໌ ແລະໃຫ້ແງ່ຄິດໃນການກຳນົດ ແລະສ້າງປ່າສະຫງວນຂອງບ້ານ.

ທີ່ສຳຄັນຂໍຂອບໃຈມາຍັງຫົວໜ້າໂຄງການໄລຟ໌ ທີ່ຄອຍສົ່ງຂໍ້ມູນ, ຄອຍຖາມເຖິງຄວາມສະດວກສະບາຍ ແລະຂໍ້ຫຍຸ້ງຍາກໃນເວລາລົງບ້ານ. ນອກຈາກນັ້ນກໍ່ຍັງໄດ້ໃຫ້ຄຳແນະນຳໃນເວລາກະກຽມ ແລະປະກອບຄຳຄິດເຫັນໃສ່ໃນຮ່າງແບບສອບຖາມ ຈົນເຮັດໃຫ້ສົມບູນ ແລະໄດ້ຂໍ້ມູນຕາມທີ່ຄາດຫວັງໄວ້.



ອົງການບ້ານຈຸດສຸມສາກົນ, ບ້ານ ໂພນສະຫວັນໃຕ້, ຮ່ອມ 14, ເຮືອນເລກທີ 207, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ໂທ/Tel: +856 021 312 519, ແຟກ/Fax: +856 021 315 841
ເວັບໄຊທ໌/Website: www.villagefocus.org

# ຄວາມເປັນມາໂດຍລວມ



ນັບແຕ່ຕົ້ນປີ 2022 ເປັນຕົ້ນມາ ໂຄງການສົ່ງເສີມການຮຽນຮູ້ກ່ຽວກັບທີ່ດິນເພື່ອເພີ່ມຄວາມໝັ້ນຄົງທາງດ້ານສະບຽງອາຫານ ຫຼືເອີ້ນຊື່ຫຍໍ້ໃນພາສາອັງກິດວ່າໄລຟ໌. ໂຄງການໄລຟ໌ໄດ້ມີການດໍາເນີນກິດຈະກໍາໃນການສ້າງຄວາມອາດສາມາດໃຫ້ໄວໜຸ່ມ ຈາກຄະນະນິຕິສາດ ແລະລັດຖະສາດ ມະຫາວິທະຍາໄລແຫ່ງຊາດ ໂດຍເນັ້ນການພັດທະນາທັກສະ, ຄວາມຮູ້ ກ່ຽວກັບສິດທິໃນການນໍາໃຊ້ທີ່ດິນ ແລະການເຂົ້າເຖິງລະບົບຍຸຕິທໍາໃຫ້ແກ່ໄວໜຸ່ມທີ່ເຂົ້າຮ່ວມໂຄງການ ເພື່ອໃຫ້ພວກເຂົາເຈົ້າສາມາດເປັນຕົວແທນໃນການປົກປ້ອງສິດຂອງຊຸມຊົນເຂົາເຈົ້າເອງ. ການເຮັດກິດຈະກໍາກັບໄວໜຸ່ມ ທາງໂຄງການໄລຟ໌ ໄດ້ນໍາໃຊ້ວິທີການໃໝ່ໆ ແລະມີຄວາມຫຼາກຫຼາຍເຊັ່ນ: ການຮຽນຮູ້ໂດຍຜ່ານການສົນທະນາ, ການນໍາໃຊ້ສື່ຕ່າງໆ ແລະ ການລົງມືປະຕິບັດຕົວຈິງ ໂດຍສະເພາະການລົງຈັດຕັ້ງປະຕິບັດກິດຈະກໍາຢູ່ຂັ້ນບ້ານ ເຊິ່ງໄດ້ເຮັດໃຫ້ເກີດມີ ການສົນທະນາລະຫວ່າງຄົນຕ່າງໄວ ເຊິ່ງໄວໜຸ່ມຈະໄດ້ມີໂອກາດຮຽນຮູ້ເລື່ອງລາວທີ່ ກ່ຽວກັບຊຸມຊົນຂອງຕົນຜ່ານຜູ້ເຖົ້າຜູ້ແກ່ໃນຊຸມຊົນ. ນອກຈາກນັ້ນ, ການສະແດງລະຄອນກໍ່ແມ່ນອີກໜຶ່ງວິທີທີ່ນັກສຶກສາໄດ້ຮຽນຮູ້ຈາກໂຄງການ ເຊິ່ງສາມາດນໍາໃຊ້ເພື່ອເປັນສື່ກາງໃນການສົ່ງຕໍ່ຄວາມຮູ້ໃໝ່ໆໃຫ້ແກ່ຊຸມຊົນຂອງຕົນໃນວົງກວ້າງໄດ້.

ໂຄງການໄລຟ໌ ຍັງໄດ້ສືບຕໍ່ຝຶກທັກສະ ແລະຄວາມຮູ້ໃໝ່ໆ ໃຫ້ແກ່ໄວໜຸ່ມເຊິ່ງຈະຊ່ວຍພັດທະນາທັກສະຕ່າງໆ ທີ່ຈໍາເປັນສໍາລັບການເຮັດໜ້າທີ່ໃນການເປັນຜູ້ອໍານວຍຄວາມສະດວກໃນການກັບໄປເຜີຍແຜ່ຂໍ້ມູນຢູ່ຂັ້ນບ້ານຂອງໄວໜຸ່ມເອງ. ໃນຂະນະດຽວກັນນັ້ນ, ບັນດາອາສາສະໝັກທີ່ເຂົ້າຮ່ວມໂຄງການ ກໍ່ຈະໄດ້ຮຽນຮູ້ທັກສະ ແລະຄວາມຮູ້ກ່ຽວກັບກົດໝາຍທີ່ຕິດພັນກັບທີ່ດິນ ແລະການເຂົ້າເຖິງຄວາມຍຸຕິທໍາ. ພ້ອມນັ້ນໂຄງການໄລຟ໌ ຍັງໄດ້ສ້າງພື້ນທີ່ໃຫ້ແກ່ໄວໜຸ່ມ ໃນການແລກປ່ຽນຄວາມຮູ້ ແລະຂ່າວສານກ່ຽວກັບທີ່ດິນເພື່ອໃຫ້ເຂົາເຈົ້າໄດ້ນໍາໃຊ້ພື້ນທີ່ດັ່ງກ່າວໃນການແລກປ່ຽນກັບກຸ່ມໄວໜຸ່ມທີ່ມີຄວາມສົນໃຈກ່ຽວກັບປະເດັນທີ່ດິນ, ປ່າໄມ້ ແລະສິ່ງແວດລ້ອມ.

ໃນປັດຈຸບັນ, ໂຄງການໄລຟ໌ ມີ ອາສາສະໝັກທີ່ເປັນນັກສຶກສາກົດໝາຍ 59 ຄົນ ເພື່ອ ນໍາສະເໜີຄວາມຮູ້ ແລະ ຄວາມສາມາດໃນການສະໜັບສະໜູນບ້ານເພື່ອແກ້ໄຂບັນຫາທີ່ດິນ, ໂຄງການຈະດໍາເນີນ **5** ກໍລະນີສຶກສາ. ເຊິ່ງໃນປັດຈຸບັນນີ້ ໂຄງການໄລຟ໌ ແມ່ນກໍາລັງຈັດຕັ້ງປະຕິບັດໂຄງການໄລຍະ **3** ທີ່ໄດ້ຮັບທຶນສະໜັບສະໜູນຈາກ **Bread for the World, Oxfam, UNDEF,** ແລະ **World Bank.** ເຊິ່ງການຈັດຕັ້ງປະຕິບັດກິດຈະກໍາຂອງອາສາສະໝັກນັກສຶກສາກົດໝາຍໃນການສະໜັບສະໜູນບ້ານເຮັດປ່າສະຫງວນຢູ່ ບ້ານນາຍາງໃຕ້, ເມືອງນໍ້າບາກ, ແຂວງ ຫຼວງພະບາງ ກໍ່ແມ່ນໜຶ່ງໃນກິດຈະກໍາທີ່ທາງໂຄງການໄລຟ໌ຫາກໍ່ເຮັດສໍາເລັດແລ້ວໃນຫວ່າງເດືອນ ກັນຍາ, ປີ **2024.**


ອົງການບ້ານຈຸດສຸມສາກົນ, ບ້ານ ໂພນສະຫວັນໃຕ້, ຮ່ອມ 14, ເຮືອນເລກທີ 207,
ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ໂທ/Tel: +856 021 312 519, ແຟກ/Fax: +856 021 315 841
ເວັບໄຊທ໌/Website: www.villagefocus.org

## 1.1. ນຳສະເໜີກໍລະນີສຶກສາ ແລະ ພື້ນທີ່ເກັບກຳຂໍ້ມູນ

### A. ກໍລະນີສຶກສາ

ກໍລະນີສຶກສານີ້ຈະສະແດງໃຫ້ເຫັນ **a)** ການຈັດຕັ້ງປະຕິບັດກິດຈະກຳຊ່ວຍເຫຼືອບ້ານ ຂອງອາສາສະໝັກນັກສຶກສາກົດໝາຍ; **b)** ການປ່ຽນແປງໃນການປັບປຸງການເຂົ້າເຖິງກົດໝາຍທີ່ດິນ, ກົດໝາຍປ່າໄມ້, ກົດໝາຍວ່າດ້ວຍຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ; **c)** ການປະຕິບັດທີ່ໄດ້ຜົນດີໃນການປ່ຽນແປງຜ່ານການເຮັດກິດຈະກຳຂອງທີມອາສາສະໝັກນັກສຶກສາກົດໝາຍ; **d)** ຂະບວນການ ແລະ ຂັ້ນຕອນໃນການສ້າງປ່າສະຫງວນ ແລະ ກົດລະບຽບໃນການປົກປັກຮັກສາ ແລະ ຄຸ້ມຄອງປ່າສະຫງວນຂອງບ້ານ.

### B. ວິທີການ ແລະ ເຄື່ອງມືໃນການເກັບກຳຂໍ້ມູນ ໂດຍລວມມີດັ່ງນີ້:

**1)** ໄດ້ມີການສຶກສາເອກະສານກ່ຽວກັບກິດຈະກຳຂອງອາສາສະໝັກນັກສຶກສາກົດໝາຍຂອງໂຄງການໄລຟ໌, ຫຼັງຈາກນັ້ນກໍ່ໄດ້ກະກຽມຮ່າງຄຳຖາມສຳລັບກຸ່ມເປົ້າໝາຍແຕ່ລະກຸ່ມ;

**2)** ການສຳພາດ: ໃນການສຳພາດ ແມ່ນໄດ້ແບ່ງອອກເປັນ **2** ວິທີການ ນັ້ນກໍ່ຄື: ການສຳພາດກຸ່ມ ແລະ ການສຳພາດບຸກຄົນ

- <u>ການສຳພາດກຸ່ມ</u> ແມ່ນໄດ້ແຍກອອກເປັນສອງກຸ່ມ ນັ້ນກໍ່ຄື ກຸ່ມຍິງ **(6**ຄົນ**)** ແລະ ກຸ່ມຊາຍ **(5**ຄົນ**)** ໃນນັ້ນ, ໄດ້ມີ ຊາວບ້ານທີ່ໄດ້ເຂົ້າຮ່ວມກິດຈະກຳຂອງອາສາສະໝັກນັກສຶກສາກົດໝາຍ ທັງສາມຄັ້ງ, ບາງຄົນກໍ່ເຂົ້າຮ່ວມແຕ່ສອງຄັ້ງ ແລະ ກໍ່ມີບາງຄົນທີ່ຫາກໍ່ເຂົ້າຮ່ວມເປັນຄັ້ງທຳອິດ. ໃນເວລາສຳພາດກຸ່ມແມ່ນໄດ້ນຳໃຊ້ຄຳຖາມທີ່ໄດ້ກຽມເອົາໄວ້ກ່ອນ, ພາສາທີ່ໃຊ້ໃນການສຳພາດ ກຸ່ມແມ່ນພາສາລາວ ແລະ ພາສາມົ້ງ. ການຄັດເລືອກຜູ້ເຂົ້າຮ່ວມແມ່ນໄດ້ຖາມຄວາມສະດວກ ແລະ ຄວາມສະໝັກໃຈ. ຂໍ້ມູນສ່ວນຫຼາຍໄດ້ມາເປັນຂໍ້ມູນການເຂົ້າຮ່ວມກິດຈະກຳ, ຂໍ້ມູນ ຄວາມຍິນຍົງກ່ຽວກັບປ່າສະຫງວນຂອງບ້ານ, ຄວາມຮູ້ກ່ຽວກັບກົດໝາຍທີ່ດິນ, ກົດໝາຍ ປ່າໄມ້ ແລະ ຄວາມຮູ້ກ່ຽວກັບການປົກປັກຮັກສາປ່າໄມ້ໃຫ້ມີຄວາມອຸດົມສົມບູນ. ເປັນການຕອບທີ່ຫຼາຍຄົນຍາດກັນເວົ້າ ແລະ ກໍ່ເປັນການເຫັນດີກັບຄົນທີ່ແລກປ່ຽນກ່ອນ ແລ້ວກໍ່ ໄດ້ຮັບ ຂໍ້ມູນ ຫຼື ຄຳຕອບເພີ່ມເຕີມຈາກຜູ້ທຳອິດໄດ້ຕອບໄປແລ້ວ ແລະ ຜູ້ເຂົ້າຮ່ວມຄົນອື່ນກໍ່ເສີມ ຄຳຕອບ ແລະ ປະກອບຄຳຄິດເຫັນທີ່ຄ້າຍຄືກັນ ເຊິ່ງເຮັດໃຫ້ໄດ້ຮັບຂໍ້ມູນທີ່ຄ່ອນຂ້າງລະອຽດພໍ ສົມຄວນ, ພ້ອມກັບໄດ້ຕົວຢ່າງຈາກຫຼາຍຄົນກ່ຽວກັບຫົວຂໍ້ທີ່ໄດ້ຖາມ.

  ເວົ້າລວມແລ້ວເປັນຂໍ້ມູນທີ່ ກຸ່ມເຂົ້າຮ່ວມຊ່ວຍກັນຕອບໃຫ້ໄດ້ຄຳຕອບທີ່ຫຼາກຫຼາຍ, ຊັດເຈນ ຂຶ້ນ ແລະ ມີຕົວຢ່າງຫຼາຍອັນ.

- <u>ການສຳພາດບຸກຄົນ</u> ເຊິ່ງເປັນຕົວແທນຂອງຄົວເຮືອນໃນການໃຫ້ສຳພາດຂອງແຕ່ລະຄົນ, ວິທີ ການແມ່ນຍ່າງເລາະບ້ານ ແລ້ວເຂົ້າໄປຖາມວ່າເຂົາເຈົ້າສະດວກເຂົ້າຮ່ວມການສຳພາດໃນກໍລະນີ ສຶກສານີ້ບໍ, ຫຼັງຈາກໄດ້ມີການຕົກລົງຍິນຍອມ ແລະ ສະໝັກໃຈຈຶ່ງໄດ້ມີການດຳເນີນການສຳພາດ, ບາງຄົນກໍ່ຖືກແນະນຳໂດຍນາຍບ້ານແຕ່ໂດຍລວມແລ້ວແມ່ນອີງຕາມຄວາມສະດວກ ແລະ ສະ ໝັກໃຈ. ຫຼັງຈາກນັ້ນກໍ່ໄດ້ຖາມຕາມຄຳຖາມທີ່ໄດ້ກະກຽມໄວ້ພ້ອມກັບມີຄຳຖາມຕາມ ເພື່ອເຈາະ ຈີ້ມເອົາຄຳຕອບໃຫ້ໄດ້ລະອຽດເທົ່າທີ່ເຂົາເຈົ້າສາມາດ


ອົງການບ້ານຈຸດສຸມສາກົນ, ບ້ານ ໂພນສະຫວັນໃຕ້, ຮ່ອມ 14, ເຮືອນເລກທີ 207, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ໂທ/Tel: +856 021 312 519, ແຟກ/Fax: +856 021 315 841
ເວັບໄຊທ໌/Website: www.villagefocus.org

ແລກປ່ຽນນຳໄດ້. ຂໍ້ມູນທີ່ໄດ້ມາສ່ວນຫຼາຍເປັນຂໍ້ມູນສ່ວນບຸກຄົນ ແລະ ຈາກປະສົບການຂອງຄອບຄົວເຂົາເຈົ້າເອງ ໄດ້ມີການເຈາະຈີ້ມຫຼາຍພໍສົມຄວນກ່ອນຈະໄດ້ຄຳຕອບ ພ້ອມຕົວຢ່າງທີ່ ເຂົາເຈົ້າຍົກມາໃຫ້ເຫັນ.

3) ເຂົ້າຮ່ວມການປະຊຸມ: ໄດ້ເຂົ້າຮ່ວມການປະຊຸມ **2** ຄັ້ງ, ຄັ້ງທີ່ **1** ແມ່ນເຂົ້າຮ່ວມຮັບຟັງ ແລະ ຮຽນຮູ້ ກ່ຽວກັບກິດຈະກຳ ຫຼັງ ຈາກການຍ່າງສຳຫຼວດຂອບເຂດປ່າສະຫງວນຂອງບ້ານ ເຊິ່ງເປັນການປະຊຸມ ລະຫວ່າງທີມວິຊາການຈາກຂັ້ນເມືອງ, ພະນັກງານໂຄງການໄລຟ໌, ອາສາສະໝັກນັກສຶກສາກົດໝາຍ ຈາກໂຄງການໄລຟ໌, ອົງການຈັດຕັ້ງບ້ານ, ຄະນະກຳມະການຄຸ້ມຄອງປ່າສະຫງວນຂອງບ້ານ. ໃນການ ເຂົ້າຮ່ວມກໍ່ໄດ້ຮັບຟັງ, ສັງເກດ ແລະ ທຳຄວາມເຂົ້າໃຈຂັ້ນຕອນການເຮັດວຽກຂອງແຕ່ລະພາກສ່ວນ ແລະ ທຳຄວາມເຂົ້າໃຈວິທີການ ແລະ ຂັ້ນຕອນການສ້າງປ່າສະຫງວນນັ້ນມີຄືແນວໃດ. ປະຊຸມຄັ້ງທີ່ **2** ແມ່ນການປະຊຸມໃຫຍ່ລວມບ້ານ ເພື່ອແຈ້ງຄວາມຄືບໜ້າໃນການສ້າງປ່າສະຫງວນຂອງບ້ານ, ເພື່ອຜ່ານບົດເລົ່າ ແລະ ຜ່ານຮ່າງກົດລະບຽບ ແລະ ຂໍ້ ຫ້າມຕ່າງໆ ໃນປ່າສະຫງວນແລ້ວຮັບຟັງຄຳຄິດ ເຫັນຂອງຊາວບ້ານຕໍ່ກັບລະບຽບ ແລະ ຂໍ້ຫ້າມຕ່າງໆເຫັນວ່າ ການປະຊຸມດັ່ງກ່າວເປັນການເປີດເວທີ ສົນທະນາລະຫວ່າງຊາວບ້ານ, ການຈັດຕັ້ງບ້ານ, ຄະນະກຳມະການຄຸ້ມຄອງປ່າສະຫງວນຂອງບ້ານ ໂດຍມີທີມວິຊາການຈາກຂັ້ນເມືອງ ແລະ ເຈົ້າເມືອງຮ່ວມຮັບຟັງເພື່ອນຳເອົາຄຳຄິດເຫັນຂອງຊາວບ້ານ ມາປັບປຸງບົດເລົ່າ.



ກຸ່ມຍິງ, ບ້ານ ນາຍາງໃຕ້. ພາບໂດຍ ດ່ອນ ບຸດຕະສິງ



ກຸ່ມຊາຍ, ບ້ານ ນາຍາງໃຕ້. ພາບໂດຍ ດ່ອນ ບຸດຕະສິງ

## C. ຈຳນວນຜູ້ເຂົ້າຮ່ວມການສຳພາດ

ຈຳນວນຜູ້ເຂົ້າຮ່ວມສຳພາດທັງໝົດແມ່ນມີ **29** ຄົນ, ໃນນັ້ນມີແມ່ຍິງຈຳນວນ **13** ຄົນ ແລະ ຊາຍຈຳນວນ **16** ຄົນ.

**ຕາຕະລາງ 1: ຈຳນວນຜູ້ເຂົ້າຮ່ວມ**

| ຈາກພາກສ່ວນ | ຈຳນວນທັງໝົດ | ຈຳນວນຊາຍ | ຈຳນວນຍິງ | ຊົນເຜົ່າ |
|---|---|---|---|---|
| ພະນັກງານລັດ | 2 | 2 | | ລາວລຸ່ມ |
| ພະນັກງານໂຄງການໄລຟ໌ | 1 | 1 | | ມົ້ງ |
| ອາສາສະໝັກນັກສຶກສາກົດໝາຍ | 5 | 2 | 3 | ມົ້ງ, ລາວລຸ່ມ |
| ຊາວບ້ານ | 21 | 11 | 10 | ລື້,ມົ້ງ |
| ລວມທັງໝົດ | **29** | **16** | **13** | |



ອົງການບ້ານຈຸດສຸມສາກົນ, ບ້ານ ໂພນສະຫວັນໃຕ້, ຮ່ອມ 14, ເຮືອນເລກທີ 207, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ໂທ/Tel: +856 021 312 519, ແຟກ/Fax: +856 021 315 841
ເວັບໄຊທ໌/Website: www.villagefocus.org

## 1.2. ພື້ນທີ່ເກັບກຳຂໍ້ມູນ

ບ້ານນາຍາງໃຕ້ ຕັ້ງຢູ່ກຸ່ມນາຍາງ, ຢູ່ທາງທິດຕາເວັນອອກຂອງເມືອງນ້ຳບາກ, ແຂວງຫຼວງພະບາງ ຫ່າງຈາກເທດ ສະບານເມືອງປະມານ 9 ກິໂລແມັດ. ທຳອິດມີແຕ່ຊົນເຜົ່າລື້ທີ່ໄດ້ມາຕັ້ງຫຼັກປັກຖານຢູ່ດິນຕອນນີ້ມາຕັ້ງແຕ່ປີ **1876**, ຊາວບ້ານໄດ້ຍິນພໍ່ເຖົ້າແມ່ເຖົ້າຂອງຕົນບອກ ເລົ່າມາວ່າຊາວບ້ານນາຍາງໃຕ້ແມ່ນມີເຊື້ອສາຍຍ້າຍຖິ່ນ ຖານ ແລະ ຕົ້ນກຳເນີດມາຈາກ ເມືອງພູຄາ, ສິບສອງພັນນາ, ປະເທດຈີນ. ແຕ່ໃນປັດຈຸບັນບ້ານນາຍາງໃຕ້ກໍ່ໄດ້ມີສອງຊົນເຜົ່າຢູ່ຮ່ວມກັນກໍ່ຄືເຜົ່າລື້ ແລະເຜົ່າມົ້ງ. ຈຸດພິເສດຂອງບ້ານນາຍາງໃຕ້ ເປັນບ້ານຫັດຖະກຳຕ່ຳຫູກ ຍ້ອມສີຜ້າທຳມະຊາດ ແລະຫັດຖະກຳເຄື່ອງຈັກສານ. ນອກຈາກນັ້ນ, ຊາວບ້ານນາຍາງໃຕ້ ຍັງໄດ້ເຮັດເປັນເຮືອນພັກແຮມ ມີປະມານ **15** ຫຼັງຄາເຮືອນ ເຊິ່ງເປັນແບບເຮືອນໄຕລື້ດັ້ງເດີມເຊິ່ງຊາວບ້ານເອີ້ນວ່າເຮືອນລື້ບູຮານ.




ບ້ານນາຍາງໃຕ້ຍັງເປັນບ້ານທີ່ໄດ້ປະກາດຢຸດຕິ ການຖາງປ່າເຮັດໄຮ່ແຕ່ປີ **2005** ເປັນຕົ້ນມາ. ນອກຈາກນັ້ນ ກໍ່ຍັງເປັນບ້ານປະກາດຢຸດຕິການຖ່າຍຊະຊາຍໃນວັນທີ **26** ເດືອນ **9**, ປີ **2019**, ເປັນບ້ານແບບຢ່າງໃນການ ປະຕິບັດກົດໝາຍດີ ແລະ ເປັນບ້ານປອດຄະດີນຳອີກ. ໃນປີ **2015** ບ້ານນາຍາງ ໃຕ້ໄດ້ປະກາດມີປ່າ ສະ ຫງວນຢ່າງເປັນທາງການ. ເຊິ່ງໃນຕອນນັ້ນ ໄດ້ມີການນຳໃຊ້ **Google Earth** ເພື່ອ ແຕ້ມແຜນທີ່ດີຈີຕ່ອນ ມາຕິດໃຫ້ກັບບ້ານ ແຕ່ວ່າຕອນນັ້ນຍັງບໍ່ມີຫຼັກເສົາໝາຍເຂດແດນແຕ່ລະຈຸດເທື່ອ ເຮັດໃຫ້ບໍ່ມີຄວາມຊັດເຈນລະຫວ່າງເຂດແດນປ່າສະຫງວນ ແລະ ສວນຢາງພາລາຂອງຊາວບ້ານ. ໃນເມື່ອກ່ອນເນື້ອ ທີ່ປ່າສະຫງວນບ້ານ ແມ່ນມີຢູ່ **115** ເຮັກຕາ ແຕ່ມາຮອດປັດຈຸບັນນີ້ຍັງເຫຼືອເນື້ອທີ່ປ່າສະຫງວນບ້ານພຽງແຕ່ **80,74** ເຮັກຕາເທົ່າ ນັ້ນ. ບ້ານ ນາຍາງໃຕ້ ໄດ້ມີການຈັດສັນວາງແຜນການນຳໃຊ້ທີ່ດິນຂອງບ້ານແລ້ວ. ໃນນັ້ນລວມມີ ດິນປຸກສ້າງ ແລະ ດິນນາ ແມ່ນມີໃບຕາດິນຖາວອນ, ສ່ວນດິນສວນ ແລະ ດິນສວນຢາງພາລາແມ່ນມີໃບນຳໃຊ້ທີ່ດິນ ແລະ ຈ່າຍຄ່າພາສີ ທີ່ດິນແຕ່ລະປີ. ລາຍລະອຽດເນື້ອທີ່ດິນ ແລະ ປ່າໄມ້ ມີດັ່ງຕາຕະລາງລຸ່ມນີ້.


ອົງການບ້ານຈຸດສຸມສາກົນ, ບ້ານ ໂພນສະຫວັນໃຕ້, ຮ່ອມ 14, ເຮືອນເລກທີ 207,
ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ໂທ/Tel: +856 021 312 519, ແຟກ/Fax: +856 021 315 841
ເວັບໄຊທ໌/Website: www.villagefocus.org

**ຕາຕະລາງ 2: ປະຊາກອນ, ເນື້ອທີ່ດິນ ແລະການດໍາລົງຊີວິດຂອງຊາວບ້ານນາຍາງໃຕ້**

| ຊື່ບ້ານ | ຊົນເຜົ່າ | ປະຊອກອນ | ເນື້ອທີ່ດິນ | ການດໍາລົງຊີວິດ | ໂຄງລ່າງພື້ນຖານຂອງບ້ານ |
|---|---|---|---|---|---|
| ນາຍາງໃຕ້ | ລື້ | **868** ຄົນ | ທັງໝົດ: **368.44** ຮຕ | ເຮັດນາເປັນຫຼັກ | ໄຟຟ້າ |
| | ມົ້ງ | ຍິງ: **404** | ດິນນາ: **87.70** ຮຕ | ຕໍ່າຫູກ ຍ້ອມສີທໍາມະຊາດ | ທາງດິນແຮ່ຫີນປົນຊາຍ |
| | | ຊາຍ:**464** | ດິນສວນພາລາ: **200** ຮຕ | ເຮັດສວນຢາງພາລາ | ນໍ້າລິນ |
| | | | ປ່າສະຫງວນ: **80.74** ຮຕ | ປູກ ແລະອົບຢາສູບ | ວັດ |
| | | | | ປູກມອນລ້ຽງມ້ອນ | ໂຮງຮຽນມັດທະຍົມຕອນຕົ້ນ |
| | | | | ຫັດຖະກໍາຈັກສານ | ເຮືອນລື້ບູຮານ |
| | | | | ປູກພືດສວນຄົວ | |

ນັບຕັ້ງແຕ່ບ້ານນາຍາງໃຕ້ໄດ້ມາຕັ້ງຖິ່ນຖານຢູ່ນີ້ ກໍ່ໄດ້ມີການນໍາໃຊ້ທີ່ດິນ, ປ່າໄມ້ ແລະ ຫ້ວຍນໍ້າເປັນພື້ນຖານ ຂອງການດໍາລົງຊີວິດຂອງຊາວ ບ້ານທຸຄົນ. ການນໍາໃຊ້ທີ່ດິນ ທີ່ຄຽງຄູ່ກັບການນໍາໃຊ້ປ່າໄມ້ ຊາວບ້ານເຄີຍມີ ການເຮັດໄຮ່ເປັນຫຼັກ, ເຮັດນາເປັນສໍາຮອງ, ຫາເຄື່ອງປ່າຂອງ ດົງເປັນອາຫານການກິນ ແລະຢາສະໝຸນໄພຕ່າງໆ ນັບແຕ່ໄມ້ທີ່ເອົາມາເຮັດເຮືອນຢູ່ ເຮັດອູ່ນອນໃຫ້ລູກ ແລະເຮັດຕໍ່າຫູກຕໍ່າແຜ່ນແພ ແລ້ວຍັງເອົາໄມ້ມາເຮັດຕູບ ເຮືອນໃຫ້ກັບສັດລ້ຽງຕ່າງໆນັບແຕ່ສັດປີກຈົນຮອດສັດໃຫຍ່ເຊັ່ນງົວ, ຄວາຍ, ໝູ ແລະອື່ນໆ ລ້ວນແລ້ວແຕ່ ເອົາມາຈາກດິນ ແລະ ຈາກປ່າໄມ້ໃນບ້ານນາຍາງໃຕ້. ແມ້ກະທັ້ງໂລງສົບ ກໍ່ໄດ້ເອົາໄມ້ໃຫຍ່ເປັນປ່ຽງມາເຮັດ ເພາະນີ້ຄືຮີດຄອງຂອງເຜົ່າໄຕລື້. ສິ່ງດັ່ງກ່າວ ໄດ້ສະແດງໃຫ້ເຫັນເຖິງຄວາມຜູກພັນລະຫວ່າງຊາວບ້ານ ແລະ ທີ່ດິນ ປ່າໄມ້ ແລະ ທໍາມະຊາດທີ່ ໄດ້ມີມາແຕ່ດົນນານແລ້ວ.




ນາງ ແສງວອນ, ອາຍຸປະມານ 85ປີ, ກໍາລັງນັ່ງຕໍ່າຫູກຢູ່ກ້ອງຕະລ່າງເຮືອນ.ເຮືອນລື້ບູຮານ ບ້ານ ນາຍາງໃຕ້.

ພາບໂດຍ ດ່ອນ ບຸດຕະສິງ

ບັນຫາດັ່ງກ່າວທີ່ເກີດຂຶ້ນໃນເຂດປ່າສະຫງວນອາດເນື່ອງມາຈາກການບໍ່ມີຫຼັກໝາຍເຂດແດນທີ່ຊັດເຈນ ແລະອາດຍ້ອນວ່າຊາວບ້ານບາງຄົນ, ບາງກຸ່ມບໍ່ເຊື່ອມຊຶມ ຍ້ອນວ່າບໍ່ເຄີຍໄດ້ຮັບການປູກຈິດສໍານຶກກ່ຽວກັບຄວາມ ໝາຍ ແລະ ຄວາມສໍາຄັນຂອງປ່າສະຫງວນຂັ້ນບ້ານມາກ່ອນ ແລະ ບໍ່ມີບົດເລົ່າທີ່ຊັດເຈນລະຫວ່າງຈຸດຫຼັ່ແຫຼມຕ່າງໆ.

> "ທີ່ຜ່ານມາໄດ້ມີການບຸກລຸກປ່າສະຫງວນ ອາດຍ້ອນວ່າ ຊາວບ້ານບໍ່ທັນເຊື່ອມຊຶມຄວາມໝາຍ ແລະ ຄວາມສຳຄັນຂອງປ່າໄມ້ ເພາະວ່າເຂົາເຈົ້າບໍ່ໄດ້ຮັບການປູກຈິດສຳ ນຶກແບບນີ້ມາກ່ອນ, ອາດຍ້ອນວ່າ ເຮົາບໍ່ມີຫຼັກໝາຍເຂດແດນທີ່ຊັດເຈນ, ແລະ ບໍ່ມີ ບົດເລົ່າທີ່ກຳນົດຂອບເຂດລະຫວ່າງຈຸດຫຼັ່ແຫຼມ ຕ່າງໆທີ່ຊັດເຈນ. ອີກຢ່າງ ໃນຕອນນັ້ນ ປ້າຍປ່າສະຫງວນກໍ່ບໍ່ມີຕິດໃນເຂດປ່າສະຫງວນ ແຕ່ວ່າຕິດ ໄວ້ຢູ່ໃນບ້ານ" ທ່ານ ໄມຄຳມອນ ແກ້ວອຸດົມ, ອາຍຸ 51 ປີ. ນາຍບ້ານ ບ້ານ ນາຍາງໃຕ້.



ການຖິ້ມຂີ້ເຫຍື່ອຊະຊາຍລົງຕາມຫ້ວຍນ້ຳລຳທານກໍ່ຍັງມີຫຼາຍຈຸດຢູ່ເຊິ່ງເປັນຫ້ວຍນ້ຳທີ່ຊາວບ້ານນາຍາງໃຕ້ໃຊ້ອາບ, ໃຊ້ຊັກເຄື່ອງ ແລະລ້າງຜັກ ແລະ ອາຫານການກິນຕ່າງໆໃນຊ່ວງເດືອນເມສາ ຫາ ເດືອນພຶດສະພາທີ່ນ້ຳ ບົກແຫ້ງ, ການນຳໃຊ້ນ້ຳລິນແມ່ນໄດ້ຢຸດສະງັກແລ້ວຊາວບ້ານໄດ້ພາກັນຫັນໄປໃຊ້ນ້ຳຫ້ວຍທີ່ໄຫຼຜ່ານໝູ່ບ້ານ.



ການຍ່າງສຳຫຼວດຂອບເຂດປ່າສະຫງວນຂອງທີມງານ ແລະຄະນະກຳມະການຄຸ້ມຄອງປ່າໄມ້ບ້ານ.
ພາບໂດຍກຸ່ມອາສາສະໝັກໂຄງການໄລຟ໌

## 2. ກິດຈະກໍາທີ່ຈັດຕັ້ງປະຕິບັດໂດຍອາສາສະໝັກນັກສຶກສາກົດໝາຍ

### 2.1. ການເກັບກໍາຂໍ້ມູນກ່ຽວກັບການປ່ຽນແປງທາງດ້ານຊັບພະຍາກອນທໍາມະຊາດ ແລະສິ່ງແວດລ້ອມ

ການເກັບກໍາມູນໃນເບື້ອງຕົ້ນຂອງອາສາສະໝັກນັກສຶກສາກົດໝາຍແມ່ນເພື່ອສຶກສາເບິ່ງບັນຫາທີ່ມີຢູ່ ແລະເພື່ອລວບລວມເອົາບັນຫາທີ່ເກີດຂຶ້ນຢູ່ພາຍໃນບ້ານນາຍາງໃຕ້, ເມືອງນໍ້າບາກ, ແຂວງຫຼວງພະບາງ ແລະ ເພື່ອ ເກັບກໍາລະອຽດກ່ຽວກັບບັນຫາທີ່ເກີດຂຶ້ນໃນຂົງເຂດ ການນໍາໃຊ້ທີ່ດິນຂອງປະຊາຊົນ, ການນໍາໃຊ້ຊັບພະຍາກອນທໍາມະຊາດ ແລະ ການກໍາຈັດຂີ້ເຫຍື້ອ ເພື່ອນໍາເອົາຂໍ້ມູນທີ່ໄດ້ມາໄປຄົ້ນຄວ້າ ແລະ ວິເຄາະເພື່ອກຽມພ້ອມສໍາລັບກິດຈະກໍາຄັ້ງຕໍ່ໄປ. ແລ້ວຊາວບ້ານກໍ່ມີສ່ວນຮ່ວມໃນການແຕ້ມແຜນວາດສາຍນໍ້າດັ່ງກ່າວຈົບສໍາເລັດ. ໂດຍມີຜູ້ເຂົ້າຮ່ວມທັງໝົດ ແມ່ນ 66 ຄົນ, ໃນນັ້ນມີຈໍານວນແມ່ຍິງ 23 ຄົນ. ຜ່ານການນໍາສະເໜີຂອງກຸ່ມຍິງ ແລະ ກຸ່ມຊາຍ ສາມາດວິເຄາະ ແລະ ລວບລວມຂໍ້ມູນສະຫຼຸບໄດ້ບັນຫາທີ່ພົ້ນເດັ່ນດັ່ງນີ້:

1. ການຖິ້ມຂີ້ເຫຍື່ອຊະຊາຍໃສ່ຫ້ວຍນໍ້າສາຍຫຼັກທີ່ໄຫຼຜ່ານບ້ານ
2. ການນໍາໃຊ້ສານເຄມີ
3. ການຖາງປ່າເຮັດໄຮ່, ເຮັດສວນຢາງພາລາຊະຊາຍ
4. ໄພແຫ້ງແລ້ງ




ແຜນວາດສາຍນໍ້າ ຈາກກຸ່ມແມ່ຍິງບ້ານນາຍາງໃຕ້, ຖ່າຍພາບໂດຍ: ກຸ່ມອາສາສະໝັກໂຄງການໄລຟ໌

ນອກຈາກການແຕ້ມລະບາຍ ແລະ ບັນຍາຍກ່ຽວກັບບັນຫາຕ່າງໆ ໃນການນໍາໃຊ້ຊັບພະຍາກອນປ່າໄມ້ຕ່າງໆ ແລ້ວ, ທີມອາສາສະໝັກຍັງໄດ້ນໍາໃຊ້ວິທີການອື່ນໆເຊັ່ນ: ໃຫ້ປະຊາຊົນເລົ່າປະຄວາມເປັນມາຂອງບ້ານ ເພື່ອໃຫ້ເຂົາເຈົ້າຮູ້ສຶກເປັນກັນເອງ ຫຼັງຈາກນັ້ນກໍ່ໄດ້ໃຫ້ເຂົາເລົ່າສູ່ຟັງຕື່ມກ່ຽວກັບຄວາມອຸດົມສົມບູນຂອງຊັບພະຍາກອນທໍາມະຊາດມີຄືແນວໃດ. ຫຼັງຈາກນັ້ນທາງທີມອາສາກໍ່ໄດ້ມີການເກັບກໍາຂໍ້ມູນໂດຍການໂອ້ລົມ ແລະ ສອບຖາມ ກ່ຽວກັບຊັບພະຍາກອນທໍາມະຊາດ. ຂະບວນການ ແລະ

ຂັ້ນຕອນດັ່ງກ່າວ ສາມາດເຮັດໃຫ້ຊາວບ້ານຮັບຮູ້ເຖິງ ການປ່ຽນແປງຂອງຊັບພະຍາກອນທຳມະຊາດພາຍໃນບ້ານ ຈາກອະດີດ ຈົນຮອດປັດຈຸບັນ.



## 2.2. ການເຜີຍແຜ່ຂໍ້ມູນກົດໝາຍກ່ຽວກັບທີ່ດິນ ແລະຊັບພະຍາກອນທຳມະຊາດ

ຫຼັງຈາກທີ່ໄດ້ລວບລວມເອົາບັນຫາທີ່ພົ້ນເດັ່ນຈາກກິດຈະກຳຄັ້ງທີ່ **1,** ທີມອາສາສະໝັກນັກສຶກສາກົດໝາຍກໍ່ໄດ້ນຳເອົາບັນຫາ ແລະ ຜົນໄດ້ຮັບຈາກກິດຈະກຳດັ່ງກ່າວເພື່ອມາສົນທະນາ ແລະວິເຄາະບັນຫາດັ່ງກ່າວຮ່ວມກັບທີມຄູຝຶກຈາກໂຄງການໄລຟ໌. ໃນວັນທີ **27** ກຸມພາ, ປີ **2024** ທີ່ບ້ານນາຍາງໃຕ້, ເມືອງນ້ຳບາກ, ແຂວງ ຫຼວງພະບາງ. ຫົວຂໍ້ເຜີຍແຜ່ຂໍ້ມູນໃນຄັ້ງນີ້ມີຢູ່ສອງຫົວຂໍ້ຫຼັກ, ຫົວຂໍ້ **1 -** ການປົກປັກຮັກສາເຂດຄຸ້ມຄອງການນຳໃຊ້, ພັນທະໃນການປົກປັກຮັກສາ ແລະ ພັດທະນາປ່າໄມ້ ແລະ ທີ່ດິນປ່າໄມ້; ແລະ ຫົວຂໍ້ **2 -** ການປົກປັກຮັກສາແຫຼ່ງນ້ຳ ແລະ ຊັບພະຍາກອນນ້ຳ ແລະການບູລະນະຟື້ນຟູນ້ຳ. ມີຈຳນວນຜູ້ເຂົ້າຮ່ວມທັງໝົດ 65 ຄົນ, ໃນນັ້ນມີແມ່ຍິງຈຳນວນ 28 ຄົນ ເຊິ່ງລວມມີສອງຊົນເຜົ່າ ນັ້ນກໍ່ຄື ເຜົ່າລື້ ແລະເຜົ່າມົ້ງ.

<u>ມາດຕາກົດໝາຍທີ່ທາງທີມອາສາສະໝັກໄດ້ຄັດເລືອກເອົາ ເພື່ອນຳໄປເຜີຍແຜ່ຢູ່ບ້ານຂອງອາສາສະໝັກ ປະກອບມີ:</u>

- ກົດໝາຍວ່າດ້ວຍ ປ່າໄມ້ ສະບັບປັບປຸງ ເລກທີ **64**ສພຊ, ລົງວັນທີ **13** ມິຖຸນາ, ປີ **20219,** ມາດຕາ **7** ພັນທະໃນການປົກປັກຮັກສາ ແລະພັດທະນາປ່າໄມ້ ແລະ ທີ່ດິນປ່າໄມ້.
- ກົດໝາຍວ່າດ້ວຍ ນ້ຳ ແລະ ຊັບພະຍາກອນນ້ຳ, ສະບັບເລກທີ **23/**ສພຊ, ລົງວັນທີ **11** ພຶດສະພາ, ປີ **2017.** ມາດຕາ **26** ການປົກປັກຮັກສານ້ຳ ແລະ ຊັບພະຍາກອນນ້ຳ; ມາດຕາ **56** ການບູລະນະຟື້ນຟູນ້ຳ ແລະ ຊັບພະຍາກອນນ້ຳ.
- ດຳລັດວ່າດ້ວຍ ປ່າສະຫງວນ ສະບັບເລກທີ **219/**ລບ, ລົງວັນທີ **20** ມິຖຸນາ, ປີ **2023,** ມາດຕາ **29** ການປົກປັກຮັກສາເຂດຄຸ້ມຄອງການນຳໃຊ້

ໃນການນຳພາເຮັດກິດຈະກຳຂອງທີມອາສາສະໝັກນັກສຶກສາກົດໝາຍໃນຄັ້ງນີ້ແມ່ນ ໄດ້ນຳໃຊ້ເຄື່ອງມື ແລະຮູບແບບທີ່ນ່າສົນໃຈ ແລະ ຍັງເປັນຮູບແບບທີ່ເນັ້ນຄວາມບັນເທີງແຕ່ແຝງດ້ວຍຄວາມຮູ້ ແລະ ທັກສະໃນການຈື່ຈຳເຊັ່ນ: ມີການເປີດສາຍວິດີໂອ "ດິນແດນແສນຮັກ", ວິດີໂອ "ການປ່ຽນແປງທຳມະຊາດ", ໂປສ໌ເຕີກ່ຽວກັບການນຳໃຊ້ປ່າໄມ້ ແລະເຄື່ອງປ່າຂອງດົງແບບຍືນຍົງ. ນອກຈາກນັ້ນກໍ່ໄດ້ມີການຖາມ ແລະ ຕອບ. ຈຸດປະສົງການລົງເຜີຍແຜ່ຂໍ້ມູນ ແມ່ນເພື່ອເຜີຍແຜ່ກົດໝາຍກ່ຽວຂ້ອງກັບພັນທະໃນການປົກປັກຮັກສາ, ພັດທະນາປ່າໄມ້ ແລະ ທີ່ດິນປ່າໄມ້, ການປົກປັກຮັກສານ້ຳ ແລະ ຊັບພະຍາກອນນ້ຳໃຫ້ປະຊາຊົນໃນບ້ານນາຍາງໃຕ້ໄດ້ຮັບຮູ້, ເຂົ້າໃຈໃນຄວາມໝາຍ ແລະ ຄວາມສຳຄັນໃນຊັບພະຍາກອນທຳມະຊາດ, ຊັບພະຍາກອນນ້ຳ, ປ່າໄມ້ ແລະ ສິ່ງແວດລ້ອມ.

ບັນຫາທີ່ພົ້ນເດັ່ນໃນການສົນທະນາແລກປ່ຽນນຳ ການຈັດຕັ້ງ ແລະ ຊາວບ້ານ ນັ້ນກໍ່ຄື:

- ບັນຫາການຖາງປ່າຊະຊາຍ ລຸກລ້ຳເຂົ້າເຖິງເຂດປ່າສະຫງວນ
- ບັນຫາ ການຖິ້ມຂີ້ເຫຍື້ອຊະຊາຍລົງໃນຫ້ວຍນ້ຳຂອງບ້ານ

- ບັນຫາ ການປັບປຸງ ແລະປົກປັກຮັກສາແຫຼ່ງນໍ້າສາຍຫຼັກ ເຊັ່ນ ນໍ້າລາ ແລະ ນໍ້າຫ້ວຍທະ
- ບັນຫາ ການຈັບຈອງທີ່ດິນທີ່ບໍ່ຖືກຕ້ອງ, ການນໍາໃຊ້ທີ່ດິນບໍ່ຖືກຕ້ອງລວມມີສິດ ແລະ ພັນທະໃນການນໍາໃຊ້ດິນ

"ການບຸກລຸກເຂດປ່າສະຫງວນຂອງບ້ານນາຍາງໃຕ້ເຮົາໄດ້ມີມາແຕ່ດົນແລ້ວ, ເຫດການທີ່ຈື່ໄດ້ຫຼັກໆເລີຍກໍ່ຄືຊາວບ້ານບາງຄອບຄົວຄ່ອຍໆລັກຖາງດິນສວນຂອງຕົນອອກໄປກວມເອົາປ່າສະຫງວນບ້ານ, ຕໍ່ມາກໍ່ມີການລັກຈູດປ່າເຮັດໃຫ້ໄຟໄໝ້ຮອດປ່າສະຫງວນບ້ານ ແລ້ວຜູ້ກ່ຽວກໍ່ໄດ້ຍັບຂະຫຍາຍຮົ້ວອອກໄປກວມເອົາເຂດປ່າສະຫງວນ. ນອກຈາກນັ້ນ, ກໍ່ຍັງມີບາງຄົນທີ່ລັກຍິງສັດປ່າ, ລັກຕັດໄມ້ໃຫຍ່ອອກຈາກເຂດປ່າສະຫງວນ. ເຫັນໄດ້ແນວນີ້ທາງການຈັດຕັ້ງບ້ານ ແລະ ຊາວບ້ານໄດ້ໂອ້ລົມກັນ ແລະ ຕັດສິນໃຈທີ່ຈະອານຸລັກປ່າສະຫງວນແຫ່ງນີ້ໄວ້" ທ່ານ ໄມຄໍາມອນ ແກ້ວອຸດົມ, ອາຍຸ **51** ປີ, ເຜົ່າລື້. ນາຍບ້ານ ບ້ານນາຍາງໃຕ້.

## 2.3. ການກໍານົດ ແລະ ສ້າງປ່າສະຫງວນຂອງບ້ານ

ໃນເດືອນສິງຫາ, ປີ 2024, ໄດ້ມີການສ້າງລະບຽບການຄຸ້ມຄອງປ່າສະຫງວນ ແລະ ຂໍ້ຫ້າມຕ່າງໆ, ເຊິ່ງມີກິດຈະກໍາທວນຄືນກ່ຽວກັບຄວາມໝາຍ ແລະ ຄວາມສໍາຄັນຂອງປ່າສະຫງວນ; ຄວາມສໍາຄັນຂອງການປົກປັກຮັກສາ ແລະ ຄຸ້ມຄອງປ່າໄມ້ ແລະ ຊັບພະຍາກອນນໍ້າ ແລະ ສິ່ງແວດລ້ອມ. ສະນັ້ນ, ການສ້າງປ່າສະຫງວນທີ່ມີມາດຕະຖານ ແລະ ມີຄວາມຊັດເຈນພ້ອມກັບມີລະບຽບການຄຸ້ມຄອງນໍາໃຊ້ ແລະ ຂໍ້ຫ້າມຕ່າງໆ. ຂະບວນການໃນການເຮັດກິດຈະກໍາຄັ້ງນີ້, ໄດ້ມີການພົບປະເພື່ອໂອ້ລົມ ແລະ ກ່າວຈຸດປະສົງໃນການເຮັດກິດຈະກໍາຄັ້ງທີ່ສາມ, ໄດ້ມີການ ຍ່າງສໍາຫຼວດຂອບເຂດປ່າສະຫງວນຂອງບ້ານຮ່ວມກັນ, ໄດ້ມີການທວນຄືນກິດຈະກໍາປູກຈິດສໍານຶກໃຫ້ແກ່ຊາວບ້ານໃນການຮັບຮູ້ ແລະເຊື່ອມຊຶມຄວາມໝາຍ ແລະ ຄວາມສໍາຄັນຂອງປ່າສະຫງວນ, ຄວາມໝາຍ ແລະ ຄວາມສໍາຄັນໃນການປົກປັກຮັກສາປ່າໄມ້ ແລະ ສິ່ງແວດລ້ອມ. ພັນທະ ແລະຄວາມຮັບຜິດຊອບຂອງຊາວບ້ານໝົດທຸກຄົນ ລວມເຖິງການຈັດຕັ້ງບ້ານ, ແລະ ຂັ້ນເມືອງ ເມື່ອເຮັດເປັນປ່າສະຫງວນແລ້ວຊາວບ້ານຕ້ອງເຂົ້າໃຈວ່າເຂົາເຈົ້າຈະບໍ່ສາມາດເຂົ້າໄປໃນປ່າເພື່ອນໍາເອົາເຄື່ອງປ່າຂອງດົງອອກໄປຂາຍເປັນສິນຄ້າ ແລະ ບໍ່ສາມາດເອົາເຄື່ອງປ່າຂອງດົງແບບດັບສູນ. ມີຈໍານວນຊາວບ້ານເຂົ້າຮ່ວມທັງໝົດ **81** ຄົນ, ແລະ ໃນນັ້ນມີແມ່ຍິງ **25** ຄົນ.



ການຍ່າງສໍາຫຼວດເຂດປ່າສະຫງວນ ແລະ ສວນຂອງຊາວບ້ານ. ພາບໂດຍ ກຸ່ມອາສາສະໝັກໂຄງການໄລຟ໌

## 2.3.1. ການມີສ່ວນຮ່ວມຂອງຊາວບ້ານໃນການກຳນົດ ແລະ ສ້າງປ່າສະຫງວນຂອງບ້ານ ນາຍາງໃຕ້



ຊາວບ້ານໄດ້ເຂົ້າຮ່ວມຕັ້ງແຕ່ຂັ້ນຕອນທຳອິດນັ້ນກໍ່ຄື ການເກັບກຳຂໍ້ມູນກ່ຽວກັບການປ່ຽນແປງທາງດ້ານຊັບພະ ຍາກອນທຳມະຊາດ ແລະ ສິ່ງແວດລ້ອມ. ຊາວບ້ານ ໄດ້ມີໂອກາດປຶກສາຫາລືກັນກ່ຽວກັບບັນຫາທີ່ເກີດຂຶ້ນຢູ ພາຍໃນບ້ານ ໃນນັ້ນໜຶ່ງໃນບັນຫາທີ່ພົ້ນເດັ່ນແມ່ນ ການຖາງປ່າຊະຊາຍ, ການມີສ່ວນຮ່ວມຂອງຊາວບ້ານໃນ ກິດຈະກຳທີ່2 ຄືການເຜີຍແຜ່ກົດໝາຍກ່ຽວກັບທີ່ດິນ ແລະ ຊັບພະຍາກອນທຳມະຊາດ. ຊາວບ້ານກໍ່ໄດ້ເຂົ້າ ຮ່ວມ ແລະ ຮັບຟັງກ່ຽວກັບກົດໝາຍທີ່ກ່ຽວຂ້ອງ, ມີສ່ວນຮ່ວມໃນການປະກອບຄຳຄິດເຫັນ ແລະ ແລກປ່ຽນ ປະສົບການເລື່ອງການປ່ຽນແປງຂອງດິນຟ້າອາກາດ ແລະ ການປ່ຽນແປງໃນຂົງເຂດທີ່ດິນ ແລະ ປ່າໄມ້ພາຍໃນ ບ້ານຂອງເຂົາເຈົ້າ. ພ້ອມນັ້ນ ຊາວບ້ານໄດ້ເຂົ້າຮ່ວມ ການປູກຈິດສຳນຶກ ແລະ ຮັບຮູ້ເຖິງຄວາມໝາຍ ແລະ ຄວາມສຳຄັນຂອງດິນ, ຊັບພະຍາກອນປ່າໄມ້ ແລະ ທຳມະຊາດ. ແລ້ວຊາວບ້ານເອງໄດ້ເລືອກເຮັດກິດຈະກຳນົດສ້າງປ່າສະຫງວນຂອງບ້ານໂດຍການຂຽນໃສ່ເຈ້ຍ ແລ້ວປ່ອນລົງເພື່ອນັບຄະແນນສຽງສ່ວນຫຼາຍວ່າຊາວ ບ້ານຢາກເຮັດກິດຈະກຳຫຍັງແທ້. ຫຼັງຈາກໄດ້ອ່ານເຈ້ຍທີ່ຊາວບ້ານຂຽນ ກໍ່ໄດ້ຖາມຕື່ມວ່າແມ່ນໃຜແດ່ເຫັນດີນຳ ວ່າຈະສ້າງປ່າສະຫງວນຂອງບ້ານ ແລ້ວທຸກຄົນກໍ່ໄດ້ຍົກມືຂຶ້ນເຫັນດີເອກະພາບ.

ກິດຈະກຳທີ່3, ການກຳນົດ ແລະ ສ້າງປ່າສະຫງວນ ເຊິ່ງໃນມື້ທີ່ໜຶ່ງຂອງກິດຈະກຳຄັ້ງທີ່ສາມກໍ່ຄືການສ້າງປ່າ ສະຫງວນຂອງບ້ານ, ໄດ້ມີການໂອ້ລົມນຳການຈັດຕັ້ງບ້ານ ແລະ ຊາວບ້ານເພື່ອແຈ້ງໃຫ້ຊາບເຖິງການສ້າງປ່າ ສະຫງວນຂອງບ້ານ. ແລ້ວມື້ສຸດທ້າຍຂອງກິດຈະກຳຄັ້ງທີ່ສາມ ກໍ່ໄດ້ມີການລວມບ້ານເຊິ່ງໄດ້ເຊີນເອົາປະຊາຊົນ ໝົດທຸກຄົນ ໂດຍສະເພາະແມ່ນຄອບຄົວທີ່ມີດິນຢູ່ໃກ້ປ່າສະຫງວນໃຫ້ເຂົ້າຮ່ວມ ເພື່ອໃຫ້ເຂົາເຈົ້າຮັບຮູ້ ແລ້ວ ປະກອບຄຳຄິດເຫັນ ແລະ ຖາມຄຳຖາມທີ່ຄ້າງຄາໃຈ ເພື່ອໃຫ້ບົດເລົ່າ, ລະບຽບ ແລະ ຂໍ້ຫ້າມຕ່າງໆສົມບູນ ຂຶ້ນ ຕາມຄວາມຕ້ອງການທີ່ເໝາະສົມຂອງຊາວບ້ານກ່ອນຈະມີການຕົກລົງເຫັນດີຢ່າງເປັນທາງການຂອງຂັ້ນ ເມືອງ ເພື່ອປະກອບເອກະສານ ແລ້ວສົ່ງໃຫ້ທາງເຈົ້າເມືອງ ເມືອງນ້ຳບາກເຊັນຮັບຮອງ.

ໂດຍລວມແລ້ວ ກິດຈະກຳການສ້າງປ່າສະຫງວນຂອງບ້ານ ນາຍາງໃຕ້ ພາຍໃຕ້ກິດຈະກຳທີ່ນຳພາໂດຍອາສາສະ ໝັກນັກສຶກສາກົດໝາຍ ຈາກໂຄງການໄລຟ໌ ແມ່ນໄດ້ເນັ້ນໃສ່ການມີສ່ວນຮ່ວມຂອງຊາວບ້ານໃນການເຫັນດີ ເຫັນພ້ອມດ້ວຍຄວາມສະໝັກໃຈ ໂດຍທີ່ຊາວບ້ານໄດ້ ຮັບຮູ້ຂໍ້ມູນລ່ວງໜ້າ ແລະ ພຽງພໍ (FPIC).

“ພວກເຮົາຊາວບ້ານກໍ່ໄດ້ພາກັນນັ່ງລໍຖ້າ ບໍ່ຮູ້ວ່າໂຄງການເພິ່ນຈະມາແທ້ບໍ ໃນທີ່ສຸດເພິ່ນກໍ່ມາຕາມທີ່ໄດ້ເວົ້ານຳພວກເຮົາ. ການຕັດໄມ້ຊະຊາຍ ແລະ ບຸກລຸກເຂດປ່າສະຫງວນຂອງບ້ານແມ່ນມີມາແຕ່ດົນແລ້ວ ແລະບັນຫານີ້ກໍ່ບໍ່ສາມາດແກ້ໄຂໄດ້ ຫວັງວ່າຫຼັງຈາກທີ່ໄດ້ມີການປັກຫຼັກໝາຍເຂດແດນທີ່ຊັດເຈນ, ມີລະບຽບກົດໝາຍ ແລະ ຂໍ້ຫ້າມທີ່ເຮັດແທ້ທຳຈິງ ກໍ່ຫວັງວ່າບ້ານເຮົາກໍ່ຄືບ້ານນາຍາງໃຕ້ນີ້ຈະມີປ່າໄມ້ທີ່ຕຶບໜາ ແລະ ຈະມີຄວາມອຸດົມສົມບູນຫຼາຍຂຶ້ນ ແລະ ມີຄວາມຍືນຍົງຕະຫຼອດໄປ” ຄຳເວົ້າທີ່ໄດ້ມາຈາກກຸ່ມສົນທະນາແມ່ຍິງ ບ້ານນາຍາງໃຕ້.


ອົງການບ້ານຈຸດສຸມສາກົນ, ບ້ານ ໂພນສະຫວັນໃຕ້, ຮ່ອມ 14, ເຮືອນເລກທີ 207,
ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ໂທ/Tel: +856 021 312 519, ແຟກ/Fax: +856 021 315 841
ເວັບໄຊທ໌/Website: www.villagefocus.org

## 3. ການປ່ຽນແປງທີ່ເກີດຂຶ້ນໃນຊຸມຊົນຜົນຈາກການມີສ່ວນຮ່ວມຂອງກິດຈະກຳອາສາສະໝັກນັກສຶກສາກົດໝາຍ

### 3.1. ການປ່ຽນແປງທີ່ເກີດຂຶ້ນໃນຊຸມຊົນຈາກການປະຕິບັດກິດຈະກຳຄັ້ງທີ່ໜຶ່ງ



ຜ່ານການຈັດຕັ້ງປະຕິບັດກິດຈະກຳຄັ້ງທີ່ໜຶ່ງ ຂອງອາສາສະໝັກນັກສຶກສາກົດໝາຍ ໃນການເກັບກຳຂໍ້ມູນ

ກ່ຽວກັບການປ່ຽນແປງທາງດ້ານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສາມາດດຶງເອົາຊາວບ້ານເຂົ້າມາ ມີສ່ວນຮ່ວມ ແລະ ເຂົາເຈົ້ານຳພາການປຶກສາຫາລືກ່ຽວກັບບັນຫາທີ່ເກີດຂຶ້ນ ແລ້ວເຂົາເຈົ້າກໍ່ໄດ້ຮຽນຮູ້ເຖິງວິທີ ການວິເຄາະ ແລະ ບຸລິມະສິດ ບັນຫາດັ່ງກ່າວ. ກິດຈະກຳຄັ້ງນີ້ ຍັງໄດ້ຊ່ວຍໃຫ້ຊາວ ບ້ານເຂົ້າໃຈບັນຫາທີ່ເກີດ ຂຶ້ນໃນຂົງເຂດຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຢູ່ໃນບ້ານຂອງເຂົາເຈົ້າ. ນອກຈາກນັ້ນ, ຊາວບ້ານຍັງເຫັນໄດ້ເຖິງການປ່ຽນແປງທາງດ້ານການທຳມາຫາກິນ ແລະ ຄວາມພູກພັນລະຫວ່າງທຳມະຊາດ.

> "ກິດຈະກຳການເກັບກຳຂໍ້ມູນຂອງນັກສຶກສາກົດໝາຍຈາກໂຄງການໄລຟ໌ ໄດ້ເຮັດໃຫ້ຊາວ ບ້ານຫຼາຍຄົນ ໄດ້ຮັບຮູ້ ແລະ ເຂົ້າໃຈ ເຖິງບັນຫາທີ່ເກີດຂຶ້ນຢູ່ພາຍໃນບ້ານ, ເປັນການລິເລີ່ມ ແລະ ກະຕຸກຊຸກຍູ້ໃຫ້ຊາວ ບ້ານພ້ອມກັບການຈັດຕັ້ງບ້ານມີຄວາມຕື່ນຕົວ ແລະ ຊອກຫາ ວິທີແກ້ໄຂບັນຫາຮ່ວມກັນ. ເຮັດແນວນີ້ ມັນຈິ່ງໄດ້ຮັບຜົນຖ້າເວົ້າເຖິງການມີສ່ວນຮ່ວມ ຂອງປະຊາຊົນໝົດທຸກຄົນ" ກຸ່ມແມ່ຍິງ ບ້ານ ນາຍາງໃຕ້ ໄດ້ປະກອບຄວາມຄິດເຫັນໃນ ກິດຈະກຳຄັ້ງທີ່ໜຶ່ງ.

ກິດຈະກຳດັ່ງກ່າວໄດ້ເຮັດໃຫ້ຊາວບ້ານສາມາດປຶກສາຫາລືກ່ຽວກັບບັນຫາຮ່ວມກັນ. ແລະ ໄດ້ໃຫ້ຊາວບ້ານມີຄວາມເປັນໄປໄດ້ໃນການຊອກຫາຄວາມເປັນເອກະພາບກ່ຽວກັບບັນຫາທີ່ເກີດຂຶ້ນ ແລະ ສະແດງຄວາມຄິດ ເຫັນຮ່ວມກັນ.

> "ການປຶກສາຫາລືເພື່ອຊອກຫາບັນຫາທີ່ເກີດຂຶ້ນຢູ່ໃນບ້ານຂອງເຮົາ ເປັນສິ່ງທີ່ດີຫຼາຍ ແລະ ເປັນແນວທາງທີ່ສາມາດດຶງເອົາການມີສ່ວນຮ່ວມຂອງຊາວບ້ານທັງສອງເຜົ່າເຂົ້າມາເພື່ອໃຫ້ຊາວບ້ານເອງເປັນຄົນເວົ້າກ່ຽວກັບບັນຫາຕ່າງໆ ແລະ ໃຫ້ເຂົາເຈົ້າມີສ່ວນຮ່ວມໃນການນຳສະເໜີບັນຫາ ແລະ ຊອກຫາວິທີແກ້ໄຂ ແບບນີ້ມັນຈິ່ງມີຄວາມຍືນຍົງ ເພາະວ່າຖ້າມີແຕ່ການຈັດຕັ້ງບ້ານເວົ້າ ຊາວບ້ານບາງຄົນກໍ່ບໍ່ຮັບຟັງ ແລະ ບໍ່ຢາກເຮັດນຳ. ອັນນີ້ເປັນສິ່ງທີ່ຈຳເປັນ ແລະ ມີຄວາມຈະແຈ້ງໃນເລື່ອງນຳສະເໜີບັນຫາ ແລະ ຊອກຫາວິທີແກ້ໄຂບັນຫາຮ່ວມກັນ" ທ້າວ ເຕັ່ງຢ່າ ຢ່າງ, ອາຍຸ 42 ປີ, ເຜົ່າມົ້ງ ຊາວບ້ານ ນາຍາງໃຕ້.

ຜ່ານການເຮັດກິດຈະກຳຂອງທີມອາສາສະໝັກນັກສຶກສາກົດໝາຍ ກໍ່ໄດ້ເຮັດໃຫ້ຊາວບ້ານມີຄວາມຕື່ນຕົວ ແລະ ມີແຮງບັນດານໃຈໃນການທີ່ຈະປົກປັກຮັກສາ ສິ່ງແວດລ້ອມອ້ອມບ້ານຂອງເຂົາເຈົ້າ, ໃນການປົກປັກຮັກສາປ່າໄມ້ ແລະ ຊັບພະຍາກອນນ້ຳ. ເຊິ່ງຊາວບ້ານບໍ່ເຄີຍໄດ້ມານັ່ງຮ່ວມກັນເພື່ອປຶກສາຫາລືກ່ຽວກັບບັນຫາທີ່ເກີດຂຶ້ນຢູ່ພາຍໃນບ້ານຂອງຕົນ ຈົນກະທັ້ງລູກຫຼານທີ່ໄດ້ໄປສຶກສາຮຽນຕໍ່ຢູ່ໃນເມືອງໄດ້ກັບມາ ແລະ ນຳພໍ່ແມ່ ປະຊາຊົນ ເຮັດກິດຈະກຳເພື່ອຮັບຮູ້ ແລະ ບຸລິມະສິດບັນຫາທີ່

ຕ້ອງການແກ້ໄຂ. ຫຼັກຖານສະແດງໃຫ້ເຫັນຊັດເຈນຈາກຄຳຕອບຂອງຊາວບ້ານທີ່ເຂົ້າຮ່ວມການສຳພາດໃນການເກັບກຳຂໍ້ມູນກໍລະນີສຶກສາເຊັ່ນ:

"ຂ້າພະເຈົ້າໄດ້ເຂົ້າຮ່ວມກິດຈະກຳທີ່ອາສາສະໝັກນັກສຶກສາກົດໝາຍຈາກໂຄງການໄລຟ໌ ທີ່ໄດ້ມາເຮັດຢູ່ໃນບ້ານນາຍາງໃຕ້ຂອງເຮົາ, ດີໃຈຫຼາຍທີ່ໄດ້ຕັດສິນໃຈເຂົ້າຮ່ວມນຳ ຈຶ່ງໄດ້ຮຽນຮູ້ສິ່ງໃໝ່ໆເຊັ່ນວ່າ ວິທີການປົກປັກຮັກສາສິ່ງແວດລ້ອມອ້ອມແອ້ມບ້ານເຮືອນເຮົາ, ການນຳໃຊ້ສານເຄມີມີຜົນກະທົບ ແລະ ຜົນເສຍຫາຍແນວໃດຕໍ່ສຸຂະພາບຂອງຊາວບ້ານເຮົາ, ຕໍ່ກັບສິ່ງແວດລ້ອມເຄມັນທຳລາຍແນວໃດ, ການຫຼຸດຜ່ອນການນຳໃຊ້ສານເຄມີ. ແລະ ກໍ່ເຮັດຈັ່ງໃດຊັບພະຍາກອນປ່າໄມ້ຂອງບ້ານນາຍາງໃຕ້ເຮົາຈະຍືນຍົງຮອດລູກຮອດຫຼານ" ກຸ່ມຊາຍ ເຜົ່າລື້ ໄດ້ແລກປ່ຽນຄວາມຮູ້ສຶກ ແລະ ສິ່ງທີ່ໄດ້ຮຽນຮູ້ຂອງເຂົາເຈົ້າ ໃນເວລາສຳພາດກໍລະນີສຶກສາ.

ຫຼັງຈາກສິ້ນສຸດກິດຈະກຳຄັ້ງທີ່ໜຶ່ງແລ້ວ ທາງທີມອາສາສະໝັກກໍ່ໄດ້ນຳເອົາຂໍ້ມູນທີ່ໄດ້ກັບໄປແລກປ່ຽນນຳທີມງານໂຄງການໄລຟ໌ ເພື່ອວິເຄາະຂໍ້ມູນດັ່ງກ່າວ ແລະ ວາງແຜນສຳລັບກິດຈະກຳຕໍ່ໄປທີ່ຈະນຳໄປເຮັດຮ່ວມກັບຊາວບ້ານ, ການຈັດຕັ້ງບ້ານ ແລະ ວິຊາການຈາກຂັ້ນເມືອງ.

"ຕອນເຂົ້າຮ່ວມກິດຈະກຳຄັ້ງທຳອິດນຳທີມອາສາຈາກໂຄງການໄລຟ໌ ກໍ່ໄດ້ຮຽນຮູ້ວ່າບ້ານຂອງເຮົານີ້ມີບັນຫາຈັກຢ່າງ , ແຕ່ລະບັນຫາແມ່ນ ເກີດມາຈາກຫຍັງ ສ່ວນຫຼາຍກໍ່ແມ່ນເກີດມາຈາກການກະທຳຂອງຄົນບ້ານເຮົາເອງ. ເມື່ອໄດ້ຮູ້ວ່າບັນຫາແມ່ນຫຍັງ ເຮົາກໍ່ມີການຕື່ນຕົວ ແລະ ພາກັນຄິດວ່າຈະເຮັດແນວໃດເພື່ອຫຼຸດຜ່ອນຫຼືຢຸດຢັ້ງບັນຫາບໍ່ໃຫ້ເກີດຂຶ້ນ. ການເຮັດກິດຈະກຳແມ່ນເຂົ້າໃຈງ່າຍເພາະວ່າມີຮູບພາບ, ມີເນື້ອໃນທີ່ເຂົ້າໃຈໄດ້, ອະທິບາຍຈະແຈ້ງ ແລະ ຫຼິ້ນເກມມ່ວນໆ ບໍ່ຮູ້ສຶກເມື່ອຍ" ນາງ ແສງມະນີ, ອາຍຸ 38 ປີ, ສະຫະພັນແມ່ຍິງບ້ານ, ເຜົ່າລື້ ຈາກບ້ານ ນາຍາງໃຕ້.

## 3.2. ການປ່ຽນແປງທີ່ເກີດຂຶ້ນໃນຊຸມຊົນຈາກການປະຕິບັດກິດຈະກຳຄັ້ງທີ່ສອງ

ການປູກຈິດສຳນຶກທາງດ້ານກົດໝາຍ ໄດ້ຊ່ວຍໃຫ້ຊາວບ້ານ ບ້ານນາຍາງໃຕ້ ໄດ້ຮຽນຮູ້ກ່ຽວກັບກົດໝາຍທີ່ ກ່ຽວຂ້ອງ ເພື່ອຊ່ວຍໃຫ້ເຂົາເຈົ້າ ສາມາດປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ທີ່ດິນຂອງເຂົາເຈົ້າໄດ້ ດີຂຶ້ນ. ເຊິ່ງວ່າມັນໄດ້ສະແດງອອກໃນເວລາສຳພາດກຸ່ມຍິງ ແລະ ກຸ່ມຊາຍ ເຂົາເຈົ້າກໍ່ໄດ້ມີການແລກປ່ຽນນຳ ເຊັ່ນ:

"ມາດຕາກົດໝາຍຕ່າງໆ ທີ່ທາງທີມອາສານັກກົດໝາຍເອົາມາແລກປ່ຽນນຳ ແມ່ນເປັນຄວາມຮູ້ໃໝ່ໆ ໂດຍສະເພາະແມ່ນການປົກປັກຮັກສາປ່າໄມ້, ປົກປັກຮັກສາຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມພາຍໃນບ້ານຂອງພວກເຮົາເພື່ອໃຫ້ມີຄວາມອຸດົມສົມບູນກວ່າເກົ່າ. ການຕັດໄມ້ທຳລາຍປ່າ ມັນຈະມີແຕ່ຜົນເສຍ ເຊັ່ນ ເກີດໄພແຫ້ງແລ້ງ, ໄພນ້ຳຖ້ວມ ແລະ ດິນ ເຈື່ອນ. ສະໝຸນໄພໃນປ່າກໍ່ຈະໝົດໄປ, ສັດປ່າກໍ່ຈະດັບສູນ. **ລູກຫຼານຂອງພວກເຮົາກໍ່ຈະບໍ່ໄດ້ເຫັນ ແລະ ອາກາດບ້ານເຮົາກໍ່ຈະຮ້ອນຫຼາຍ**. ອັນນີ້ມັນເປັນຄວາມຮູ້ພື້ນຖານທີ່ສຳຄັນ ແລະ ຈຳເປັນໃຫ້ແກ່ຊາວບ້ານໄດ້ມີໄວ້ ແລະ ຮັບຮູ້ໄວ້ເພື່ອຜົນປະໂຫຍດຂອງສ່ວນລວມ ແລະ ຂອງບຸກຄົນ" ຈາກການສົນທະນາກຸ່ມຊາຍ, ບ້ານ ນາຍາງໃຕ້.

ນອກຈາກນັ້ນ, ຊາວບ້ານກໍ່ໄດ້ຮັບຮູ້ວ່າການປົກປັກຮັກສາແຫຼ່ງນ້ຳ, ປ່າໄມ້ ແລະຊັບພະຍາກອນທຳມະຊາດ ມັນ ຈະຊ່ວຍໃຫ້ອາກາດຣົ່ມເຢັນ, ມີຄວາມຊຸ່ມຊື່ນ ແລະ ບໍ່ເກີດໄພແຫ້ງແລ້ງ ຫຼືໄພນ້ຳຖ້ວມ. ສິ່ງສຳຄັນອີກອັນໜຶ່ງ ກໍ່ຄືຊາວບ້ານໄດ້ເຫັນເຖິງຄວາມສຳຄັນໃນການຮັບຮູ້ກົດໝາຍໂດຍສະເພາະແມ່ນກົດໝາຍທີ່ດິນ, ກົດໝາຍປ່າ ໄມ້ ແລະ ຊັບພະຍາກອນທຳມະຊາດແມ່ນຄວາມປອດໄພສຳລັບຊາວບ້ານ ທັງໃນປັດຈຸບັນ ແລະ ໃນອະນາ ຄົດ. ເຊິ່ງມັນໄດ້ສະແດງອອກໃນຄຳຄິດເຫັນເວລາສຳພາດຊາວບ້ານ.

"ຖ້າມີຄົນຢາກຮູ້ກ່ຽວກັບກົດໝາຍທີ່ຮູ້ຈັກເຊັ່ນ ກົດໝາຍວ່າດ້ວຍທີ່ດິນ, ວ່າດ້ວຍປ່າໄມ້, ວ່າດ້ວຍນ້ຳ ພວກເຮົາສາມາດແນະນຳ ແລະ ແລກປ່ຽນນຳໄດ້. ອີກຢ່າງກົດໝາຍເລົ່ານີ້ກໍ່ມີຢູ່ໃນແຜ່ນໂປສ໌ເຕີທີ່ທາງທີມອາສານັກກົດໝາຍໄດ້ມອບໃຫ້ ແລະ ກໍ່ສາມາດເຊື່ອຖືໄດ້ເພາະວ່າມັນມີຫຼາຍພາກສ່ວນທີ່ມີສ່ວນຮ່ວມໃສ່ໂລໂກ ເພື່ອຮັບຮອງວ່າມາດຕາກົດໝາຍຕ່າງໆໃນນັ້ນແມ່ນຂອງແທ້, ແລະ ມີຜົນສັກສິດແທ້. ອີກຢ່າງພວກເຮົາກໍ່ສາມາດເອົາມາຕິດຫ້ອຍໄວ້ປະດັບເຮືອນກໍ່ງາມແຖມຍັງມີຄວາມຮູ້ຢູ່ນຳອີກ" ນາງ ຕານ ອາຍຸ **42**ປີ, ຈາກບ້ານ ນາຍາງໃຕ້.

ເຊິ່ງກໍ່ໄດ້ສ້າງການປ່ຽນແປງພາຍໃນບ້ານນາຍາງໃຕ້ ຈາກທີ່ວ່າໃນເມື່ອກ່ອນຊາວບ້ານບໍ່ເຄີຍໄດ້ຮັບການຝຶກອົບຮົມກ່ຽວກັບກົດໝາຍ ໂດຍສະເພາະແມ່ນກົດໝາຍວ່າດ້ວຍປ່າໄມ້, ກົດໝາຍວ່າດ້ວຍສິ່ງແວດລ້ອມ, ກົດໝາຍວ່າດ້ວຍຊັບພະຍາກອນນ້ຳ ແລະ ດຳລັດກ່ຽວກັບການຄຸ້ມຄອງປ່າສະຫງວນ. ສະນັ້ນ, ພາຍຫຼັງການໄດ້ເຂົ້າຮ່ວມກິດຈະກຳຂອງທີມອາສາສະໝັກນັກສຶກສາກົດໝາຍຂອງໂຄງການໄລຟ໌ ໄດ້ເຮັດໃຫ້ຊາວບ້ານໄດ້ມີພື້ນຖານຄວາມຮູ້ ແລະ ໄດ້ຮັບການປູກຈິດສຳນຶກກ່ຽວກັບການປົກປັກຮັກສາປ່າໄມ້, ຮັກສາສິ່ງແວດລ້ອມ ແລະ ປົກປັກຮັກສາແມ່ນ້ຳ ເພື່ອຄວາມອຸດົມສົມບູນຂອງບ້ານນາຍາງໃຕ້ ເພື່ອສ້າງຄວາມຍືນຍົງໃຫ້ຮອດເສັ້ນລູກ, ຫຼານ, ເຫຼນ ແລະ ລ່ອນ.

ຊາວບ້ານ ແລະ ວິຊາການຈາກຂັ້ນເມືອງກໍ່ໄດ້ເວົ້າເປັນທຳນອງດຽວກັນວ່າ ກິດຈະກຳທີ່ສຳຄັນ ແມ່ນການປູກຈິດສຳນຶກໃຫ້ປະຊາຊົນໄດ້ຮັບຮູ້ ແລະ ເຂົ້າໃຈກ່ຽວກັບການປົກປັກຮັກສາ ແລະ ຟື້ນຟູປ່າໄມ້, ການມີຄວາມຕື່ນຕົວ, ການມີສ່ວນຮ່ວມ ແລະ ການມີຄວາມຮັບຜິດຊອບຈາກປະຊາຊົນ ເພື່ອໃຫ້ເຂົາເຈົ້າໄດ້ເປັນເຈົ້າການໃນການປົກປັກຮັກສາຊັບພະຍາກອນທຳມະຊາດຂອງເຂົາເຈົ້າເອງ.

"ແມ່ດີໃຈຫຼາຍທີ່ລູກຫຼານບ້ານເຮົາໄດ້ນຳເອົາໂຄງການດີໆ ກໍ່ຄືໂຄງການໄລຟ໌ ມາຊ່ວຍເຫຼືອບ້ານ ໃຫ້ຮູ້ຈັກເຖິງການປ່ຽນແປງທາງແຫຼ່ງນໍ້າ ແລະ ດິນຟ້າອາກາດ ແລະ ອື່ນໆອີກ. ນອກຈາກນັ້ນ ກໍ່ຍັງໄດ້ຮຽນຮູ້ການອະນຸລັກຮັກສາປ່າໄມ້ຢູ່ບ້ານເຮົາ. ອັນນີ້ກໍ່ແມ່ນຂໍ້ມູນທີ່ເຮົາສາມາດເອົາບອກລູກ ບອກຫຼານ ບອກເຫຼນ ໃຫ້ເຂົາເຈົ້າກໍ່ມີຄວາມຮູ້ນີ້ໄວ້ເພື່ອເປັນປະໂຫຍດແກ່ເຂົາເຈົ້າໃນອະນາຄົດຂອງເຂົາເຈົ້າເອງ ແລະຂອງປ່າໄມ້ບ້ານເຮົາ" ນາງບົວລອຍ, ອາຍຸ **64** ປີ ເຜົ່າລື້ ຈາກບ້ານນາຍາງໃຕ້.

ຈາກການແລກປ່ຽນດັ່ງກ່າວສະແດງໃຫ້ເຫັນເຖິງການປ່ຽນແປງທາງດ້ານແນວຄວາມຄິດ ແລະ ຈິດສຳນຶກທີ່ຊາວບ້ານເລີ່ມມີການຖ່າຍທອດຄວາມຮູ້ທີ່ເຂົາເຈົ້າໄດ້ຮັບ ແລະ ສົ່ງຕໍ່ໃຫ້ລູກ, ໃຫ້ຫຼານໄດ້ຮັບຮູ້ນຳ. ເຊິ່ງມັນໄດ້ ບົ່ງບອກເຖິງຄວາມຍືນຍົງທີ່ຈະເກີດຂຶ້ນໃນອານາຄົດ.

ແຕ່ການຮັບຮູ້ກ່ຽວກັບກົດໝາຍ ລະຫວ່າງເຜົ່າລື້ ແລະ ເຜົ່າມົ້ງ ເຫັນວ່າເຜົ່າລື້ຈື່ໄດ້ດີກວ່າ ເນື່ອງຈາກວ່າສ່ວນ ຫຼາຍຊາວບ້ານທີ່ເປັນເຜົ່າມົ້ງບໍ່ໄດ້ເຂົ້າຮ່ວມກິດຈະກຳຂອງທີມອາສາສະໝັກນັກສຶກສາກົດໝາຍ. ຊາວບ້ານບາງຄົນກໍ່ໄດ້ເວົ້າວ່າໂຕເອງຄາວຽກຫຼາຍ ແລະ ບໍ່ໄດ້ເຂົ້າຮ່ວມ ກິດຈະກຳນຳ, ຊາວບ້ານບາງຄົນກໍ່ໄດ້ ບອກວ່າ ບໍ່ໄດ້ເຂົ້າຮ່ວມກິດຈະກຳນຳເນື່ອງຈາກວ່າ ເຂົາເຈົ້າບໍ່ມີດິນທີ່ຢູ່ໃກ້ກັບເຂດປ່າສະຫງວນຂອງບ້ານກໍ່ເລີຍ ຄິດວ່າບໍ່ຈຳເປັນຕ້ອງເຂົ້າຮ່ວມນຳ, ເຊິ່ງບາງຄົນກໍ່ເວົ້າວ່າ ຖ້າເຮົາຢາກຮູ້ກ່ຽວກັບກິດຈະກຳນັ້ນ ເຮົາກໍ່ສາມາດເຂົ້າ ໄປຖາມຜູ້ທີ່ໄດ້ເຂົ້າຮ່ວມ ຫຼື ຖາມນາຍບ້ານກໍ່ໄດ້.

"ທາງບ້ານຂອງພວກເຮົາໄດ້ເລືອກເຮັດກິດຈະກຳການກຳນົດ ແລະ ສ້າງປ່າສະຫງວນບ້ານ ຍ້ອນວ່າທາງການຈັດຕັ້ງບ້ານ ແລະ ປະຊາຊົນກໍ່ໄດ້ປຶກສາຫາລືກັນ ແລະ ເຫັນໄດ້ເຖິງບັນຫາເລັ່ງດ່ວນທີ່ຕ້ອງໄດ້ຮັບການແກ້ໄຂ ນັ້ນກໍ່ຄື ການບຸກລຸກເຂດປ່າສະຫງວນບ້ານ. ຖ້າບໍ່ມີການແກ້ໄຂຕໍ່ໄປບ້ານນາຍາງໃຕ້ຂອງພວກເຮົາກໍ່ຈະບໍ່ມີປ່າໄມ້ໄວ້ໃຫ້ລູກຫຼານໄດ້ເຫັນໃນອະນາຄົດ, ແລະ ອີກຢ່າງບ້ານເຮົາກໍ່ຈະເກີດມີໄພແລ້ງ ທຸກມື້ນີ້ພໍຮອດປະມານເດືອນ **4** ເດືອນ **5** ຊາວບ້ານພວກເຮົາບໍ່ມີນໍ້າພຽງພໍໃຊ້ໃນແຕ່ລະຄອບຄົວ. ສະນັ້ນ, ຈິ່ງເຫັນໄດ້ເຖິງຄວາມສຳຄັນ ແລະ ເຫັນດີພາຍໃນບ້ານຂອງພວກເຮົາຈິ່ງຕັດສິນໃຈສະເໜີຂໍສ້າງປ່າສະຫງວນຂອງບ້ານ" ຈາກການສົນທະນາກຸ່ມຊາຍ ບ້ານນາຍາງໃຕ້.


ອົງການບ້ານຈຸດສຸມສາກົນ, ບ້ານ ໂພນສະຫວັນໃຕ້, ຮ່ອມ 14, ເຮືອນເລກທີ 207,
ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ໂທ/Tel: +856 021 312 519, ແຟກ/Fax: +856 021 315 841
ເວັບໄຊທ໌/Website: www.villagefocus.org

ຜ່ານການເຮັດກິດຈະກຳຄັ້ງທີ່ສອງຂອງ ອາສາສະໝັກນັກສຶກສາກົດໝາຍ ຊາວບ້ານໄດ້ເຂົ້າໃຈ ແລະ ຮັບຮູ້ເຖິງ ຄວາມໝາຍ ແລະ ຄວາມສຳຄັນໃນການມີປ່າ ແລະ ມີນ້ຳ ນັ້ນຄືສິ່ງສຳຄັນໃນການດຳລົງຊີວິດຂອງຊາວບ້ານ ບ້ານນາຍາງໃຕ້. ສະນັ້ນ, ການສ້າງປ່າສະຫງວນຂອງບ້ານຈຶ່ງມີຄວາມຈຳເປັນ ແລະ ເປັນຄວາມຕ້ອງການຂອງ ຊາວບ້ານເພື່ອຢາກປົກປັກຮັກສາໜ່ວຍພູທີ່ຍັງມີປ່າໄມ້ນີ້ໄວ້.ດັ່ງນັ້ນ ກິດຈະກຳສ້າງປ່າສະຫງວນຂອງບ້ານຈຶ່ງໄດ້ ເກີດຂຶ້ນ.



## 3.3. ການປ່ຽນແປງທີ່ເກີດຂຶ້ນໃນຊຸມຊົນຈາກການປະຕິບັດກິດຈະກຳຄັ້ງທີ່ 3

ຊາວບ້ານທັງຫຼາຍໄດ້ຮັບຮູ້ ແລະ ເຊື່ອວ່າປ່າສະຫງວນບ້ານ ຈະຊ່ວຍຮັບປະກັນຊັບພະຍາກອນທຳມະຊາດໃຫ້ ດີຂຶ້ນເຊັ່ນ: ການເພີ່ມຂຶ້ນຂອງເຄື່ອງປ່າຂອງດົງ, ຢາຮັກສາພະຍາດ, ປ່າໄມ້ເພີ່ມຂຶ້ນ ແລະ ຕຶບໜາ ພ້ອມນັ້ນກໍ່ ຍັງຈະຊ່ວຍໃຫ້ອາກາດພາຍໃນບ້ານມີຄວາມຊຸ່ມເຢັນດີ. ເຊິ່ງມັນຍັງເປັນການເພີ່ມອົກຊີຊ່ວຍຫາຍໃຈສະດວກສະບາຍ, ສັດປ່າທີ່ເພີ່ມຂຶ້ນ, ຊີວະນາງພັນເພີ່ມຂຶ້ນ ແລະ ຊ່ວຍປົກປ້ອງຊາວບ້ານ ຈາກໄພແຫ້ງແລ້ງ, ຈາກດິນເຈື່ອນ ແລະ ໄພນ້ຳຖ້ວມ.

> "ເມື່ອມີປ່າສະຫງວນແລ້ວອາກາດຈະກັບມາດີອີກຄັ້ງ, ໄພແລ້ງຈະບໍ່ມາເຢືອນບ້ານ ເຮົາອີກ, ຊາວ ບ້ານຈະມີບ່ອນອະນຸລັກຕົ້ນໄມ້ທີ່ສາມາດເອົາມາເຮັດຍ້ອມສີຜ້າທຳ ມະຊາດ, ສັດປ່າຈະເພີ່ມ ຂຶ້ນ ແລະ ຊາວບ້ານຈະອະນຸລັກໄວ້ຜືນປ່າແຫ່ງນີ້. ການ ປ່ຽນແປງທີ່ຍິ່ງໃຫຍ່ທີ່ ຊາວບ້ານນາຍາງໃຕ້ ລໍຄອຍ ແລະ ຫວັງວ່າບ້ານນາຍາງໃຕ້ ຂອງພວກເຮົາຈະມີຜືນປ່າທີ່ອຸດົມສົມບູນ ແລະຕຶບປ່າໜາ ໃຫ້ລູກ, ຫຼານ, ເຫຼັນ, ແລະ ລ່ອນໄດ້ເຫັນ" **ຄວາມຄິດເຫັນ ແລະ ມຸມມອງຂອງກຸ່ມຊາຍ ບ້ານ ນາຍາງໃຕ້.**

ໃນການສ້າງປ່າສະຫງວນຂອງບ້ານ ແມ່ນຊາວບ້ານ ແລະ ການຈັດຕັ້ງບ້ານໄດ້ໂອ້ລົມ ແລະ ປຶກສາຫາລືກັນ ແບບມີສ່ວນຮ່ວມຕັ້ງແຕ່ຕົ້ນ ຈົນຮອດມື້ສຸດທ້າຍ. ແລະສາເຫດທີ່ຊາວບ້ານ ນາຍາງໃຕ້ໄດ້ເລືອກເອົາກິດຈະກຳ ການກຳນົດ ແລະ ສ້າງປ່າສະຫງວນຂອງບ້ານກໍ່ເນື່ອງຈາກວ່າພູຫວດເປັນພຽງພູໜ່ວຍດຽວທີ່ຍັງມີຕົ້ນໄມ້ຫຼາຍ ແຕ່ວ່າອ້ອມຮອບດ້ວຍສວນຢາງພາລາຂອງຊາວບ້ານ ໃນແຕ່ລະປີຈະມີການບຸກລຸກຍັບເຂດແດນສວນເຂົ້າໃນ ປ່າສະຫງວນ.

ສ່ວນຊາວບ້ານທີ່ມີເຮືອນ ແລະ ມີສວນຢາງພາລາຢູ່ໃກ້ກັບປ່າສະຫງວນ ກໍ່ໄດ້ມີຄຳຖາມເພື່ອໃຫ້ໝັ້ນໃຈວ່າເຂົາ ເຈົ້າເຂົ້າໃຈດີ ແລະ ຈະບໍ່ຖືກປັບໄໝພາຍຫຼັງທີ່ໄດ້ມີຂໍ້ຕົກລົງເຫັນດີກັນແລ້ວ. ໃນການປະຊຸມບ້ານໃຫຍ່ໄດ້ມີ ຄອບຄົວໜຶ່ງທີ່ຕັ້ງເຮືອນຢູ່ໃກ້ກັບປ່າສະຫງວນກໍ່ໄດ້ຖາມ "**ຄອບຄົວຂ້ອຍສາມາດຕັດໄມ້ໃນປ່າສະຫງວນໄດ້ບໍ ຖ້າຫາກວ່າມີງ່າໄມ້ທີ່ເນີ້ງລົງມາໃກ້ເຮືອນ ເພາະວ່າ ເຮືອນຂອງຂ້ອຍແມ່ນຢູ່ໃກ້ກັບເຂດປ່າສະຫງວນ**" ຊາວບ້ານນາຍາງໃຕ້ຊາຍຄົນໜຶ່ງທີ່ເປັນເຜົ່າມົ້ງ, ອາຍຸປະ ມານ**45**ປີ ໄດ້ຖາມໃນທີ່ປະຊຸມລວມບ້ານ. ແລ້ວລາວ ກໍ່ໄດ້ຮັບຄຳຕອບຈາກທາງຂັ້ນເມືອງຕອບວ່າ "**ຖ້າຫາກວ່າຢ້ານຕົ້ນໄມ້ລົ້ມມາທັບເຮືອນແມ່ນສາມາດຕັດອອກໄດ້ ແລະບໍ່ມີ ການປັບໄໝເກີດຂຶ້ນ**" ວິຊາການ ຈາກຫ້ອງວ່າການເມືອງນ້ຳບາກໃຫ້ຄຳຕອບ ໂດຍທີ່ມີຄະນະກຳມະການຄຸ້ມຄອງປ່າໄມ້ບ້ານເຫັນດີນຳ.

ສ່ວນຜູ້ທີ່ມີສວນຢາງພາລາຢູ່ໃກ້ຂອບເຂດປ່າສະຫງວນກໍ່ບໍ່ໄດ້ມີຄໍາຖາມຫຍັງ ເນື່ອງຈາກວ່າເຂົາເຈົ້າໄດ້ເຫັນຊັດ ເຈນແລ້ວ ກ່ຽວກັບເຂດແດນທີ່ມີຈຸດຫຼັ່ແຫຼມໃນຮ່າງບົດເລົ່າທີ່ໄດ້ລະບຸຕໍາແໜ່ງ ແລະ ຈຸດຫ່າງລະຫວ່າງດິນສວນ ແລະ ປ່າສະຫງວນບ້ານ ຊັດເຈນ ແລ້ວເຂົາເຈົ້າ ເຫຼົ່ານັ້ນກໍ່ໄດ້ຕົກລົງເຫັນດີຕາມຮ່າງບົດເລົ່າດັ່ງກ່າວນັ້ນ.



"ການບຸກລຸກເຂດປ່າສະຫງວນຂອງບ້ານນາຍາງໃຕ້ເຮົາໄດ້ມີມາແຕ່ດົນແລ້ວ, ເຫດການທີ່ຈື່ໄດ້ ຫຼັກໆເລີຍກໍ່ຄືຊາວບ້ານ ບາງຄອບຄົວຄ່ອຍໆລັກຖາງດິນສວນຂອງຕົນອອກໄປກວມເອົາປ່າສະຫງວນບ້ານ, ຕໍ່ມາກໍ່ມີການລັກຈູດປ່າເຮັດໃຫ້ໄຟໄ ໝ້ຮອດປ່າສະຫງວນບ້ານ ແລ້ວຜູ້ກ່ຽວກໍ່ໄດ້ຍັບຂະຫຍາຍຮົ້ວອອກໄປກວມເອົາເຂດປ່າສະຫງວນ. ນອກຈາກນັ້ນ, ກໍ່ຍັງ ມີບາງຄົນທີ່ລັກຍິງສັດປ່າ, ລັກຕັດໄມ້ໃຫຍ່ອອກຈາກເຂດປ່າສະຫງວນ. ເຫັນໄດ້ແນວນີ້ ທາງການຈັດຕັ້ງບ້ານ ແລະ ຊາວ ບ້ານໄດ້ໂອ້ລົມກັນ ແລະ ຕັດສິນໃຈທີ່ຈະອານຸລັກປ່າສະຫງວນແຫ່ງນີ້ໄວ້" ທ້າວ ໄມກອນລົ້ວ ຂັນທະບຸນ, ອາຍຸ 64 ປີ, ເຜົ່າລື້.

## 3.4. ກົດລະບຽບການຄຸ້ມຄອງນໍາໃຊ້ທີ່ດິນ ແລະປ່າໄມ້ຂັ້ນບ້ານ

ເພື່ອເຮັດໃຫ້ການຄຸ້ມຄອງນໍາໃຊ້ທີ່ດິນ ແລະ ປ່າໄມ້ ຂອງບ້ານໃຫ້ຖືກຕ້ອງຕາມທິດທາງນະໂຍບາຍຂອງຂັ້ນເທິງ ວາງອອກ ແລະ ແນ່ໃສ່ດ້ານຮີດຄອງປະເພນີ, ການທໍາມາຫາກິນ, ການປົກປັກຮັກສາປ່າໄມ້ ພ້ອມທັງແກ້ໄຂຊີ ວິດການເປັນຢູ່ຂອງປະຊາຊົນ ບັນດາເຜົ່າໃຫ້ດີຂຶ້ນເທື່ອລະ ກ້າວ. ອົງການຈັດຕັ້ງບ້ານ ພ້ອມດ້ວຍເຖົ້າແກ່ແນວ ໂຮມ ແລະ ພໍ່ແມ່ປະຊາຊົນພາຍໃນບ້ານ ເປັນ ເອກະພາບຮ່ວມກັນວາງລະບຽບໃນການ ປົກປັກຮັກສາຄຸ້ມ ຄອງ, ນໍາໃຊ້ທີ່ດິນ ແລະ ປ່າໄມ້ ກໍ່ຄືຊັບພະຍາກອນທໍາມະຊາດທີ່ ມີພາຍໃນບ້ານ.

ຜູ້ບຸກລຸກປ່າສະຫງວນຂອງບ້ານ ຈະຖືກລົງໂທດຕາມກົດລະບຽບ ແລະ ຂໍ້ຫ້າມທີ່ໄດ້ຜ່ານການຕົກລົງເຫັນດີ ແບບມີສ່ວນຮ່ວມ ຈາກຊາວບ້ານ, ຄະນະກໍາມະການຄຸ້ມຄອງປ່າສະຫງວນຂອງບ້ານ, ການຈັດຕັ້ງບ້ານ, ວິຊາ ການຈາກຫ້ອງວ່າການ ແລະ ຫ້ອງການຊັບເມືອງນໍ້າບາກ.

ດັ່ງຄໍາກ່າວຂອງຄະນະກໍາມະການຄຸ້ມຄອງປ່າສະຫງວນຂອງບ້ານ ໃນທີ່ປະຊຸມບ້ານວ່າ:

"ຖ້າຫາກວ່າຄອບຄົວໃດ ຫຼືບຸກຄົນໃດໄດ້ບຸກເບີກເຮັດສວນຢາງພາລາ ຫຼື ເຮັດການຜະ ລິດໃນຂອບເຂດປ່າ ສະຫງວນບ້ານນັບຕັ້ງແຕ່ປີ 2023 ແລະ 2024 ເປັນຕົ້ນມາ ແມ່ນ ຈະຖືກເວນຄືນໂດຍອີງໃສ່ກົດໝາຍ ຂະແໜງປ່າໄມ້" ຄະນະກໍາມະການຄຸ້ມຄອງປ່າໄມ້ຂັ້ນບ້ານໄດ້ຕົກລົງເຫັນດີເປັນເອກະພາບກັນ ໃນເວລາ ປະຊຸມຮ່າງບົດເລົ່າ ແລະ ຮ່າງລະບຽບຄຸ້ມຄອງປ່າສະຫງວນຂັ້ນບ້ານ.


ອົງການບ້ານຈຸດສຸມສາກົນ, ບ້ານ ໂພນສະຫວັນໃຕ້, ຮ່ອມ 14, ເຮືອນເລກທີ 207, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ໂທ/Tel: +856 021 312 519, ແຟກ/Fax: +856 021 315 841
ເວັບໄຊທ໌/Website: www.villagefocus.org

ໂດຍລະບຽບ ແລະ ຂໍ້ຫ້າມດັ່ງກ່າວແມ່ນອີງໃສ່ກົດໝາຍປ່າໄມ້ ແລະ ດຳລັດວ່າດ້ວຍປ່າສະຫງວນເປັນຫຼັກ ເຊັ່ນ:

- ອີງຕາມ: ກົດໝາຍວ່າດ້ວຍ ປ່າໄມ້ ສະບັບປັບປຸງ ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ: ດຳລັດວ່າດ້ວຍ ປ່າສະຫງວນ ສະບັບເລກທີ 219/ລບ, ລົງວັນທີ 20 ມິຖຸນາ 2023;
- ອີງຕາມ: ຄຳແນະນຳກ່ຽວກັບ ການວາງແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ ສະບັບເລກທີ 4143/ກປ, ລົງວັນທີ 03 ຕຸລາ 2023;
- ອີງຕາມ: ການຄົ້ນຄວ້າ ແລະ ຕົກລົງເປັນເອກະພາບຂອງຄະນະຄຸ້ມຄອງທີ່ດິນປ່າໄມ້ ຂັ້ນບ້ານ ແລະ ປະຊາ ຊົນພາຍໃນບ້ານ ນາຍາງໃຕ້ ໃນຄັ້ງວັນທີ 30/ 8/ 2024.

ໃນລະບຽບການຄຸ້ມຄອງ ກໍ່ໄດ້ລະບຸຊັດເຈນຕໍ່ກັບການລະເມີດຕ່າງໆຕໍ່ກັບປ່າສະຫງວນຂອງບ້ານ ນາຍາງໃຕ້. ຍົກຕົວຢ່າງບາງ ມາດຕາຈາກກົດລະບຽບຕໍ່ກັບຜູ້ລະເມີດເຊັ່ນ ມາດຕາ **4:** ວ່າດ້ວຍການວາງລະບຽບການຄຸ້ມ ຄອງປ່າສະຫງວນ

**1.** ຫ້າມຂຸດຄົ້ນເຄື່ອງປ່າຂອງດົງທຸກຊະນິດໃນຂອບເຂດປ່າສະຫງວນ (ຍົກເວັ້ນໜໍ່ໄມ້, ຍອດຫວາຍ, ແມ່ນ ສາມາດຫາເປັນ ອາຫານ ພາຍໃນຄອບຄົວໄດ້ ແຕ່ຫ້າມຂາຍເປັນສິນຄ້າ);

**2.** ຫ້າມລ່າສັດປ່າທຸກຊະນິດໃນຂອບເຂດປ່າສະຫງວນຂອງບ້ານ;

7. ຫ້າມປ່ອຍສັດລ້ຽງທຸກປະເພດຢູ່ໃນເຂດປ່າສະຫງວນຂອງບ້ານ;

**8.** ຫ້າມເຄື່ອນຍ້າຍ, ທຳລາຍ, ປ່ຽນແປງ: ປ້າຍ, ຫຼັກເຂດ ແລະ ເຄື່ອງໝາຍເຂດແດນປ່າສະຫງວນບ້ານ.

ກົດລະບຽບໃນ ມາດຕາ **5:** ມາດຕະການຕໍ່ຜູ້ລະເມີດ

**1)** ຖ້າບຸກລຸກຕັດຕົ້ນໄມ້ ຫຼື ເລື່ອຍໄມ້ທີ່ມີໜ້າຕ້າງ **30**ຊມ ຂຶ້ນໄປ

- ຄັ້ງທີ່ **1:** ປັບໄໝ **1** ແມັດກ້ອນ**/ 10** ລ້ານກີບ ພ້ອມຍຶດຂອງກາງເປັນຂອງບ້ານ ແລະ ສຶກສາອົບຮົມ ພ້ອມທັງເຮັດ ບົດບັນທຶກ
- ຄັ້ງທີ່ **2: 1** ແມັດກ້ອນ**/20**ລ້ານກີບ ພ້ອມທັງຍຶດຂອງກາງເປັນຂອງບ້ານ ແລະ ປະກອບເອກະສານສົ່ງ ໃຫ້ເມືອງດຳ ເນີນ ຕາມຂັ້ນຕອນຂອງກົດໝາຍ

**2)** ຈູດປ່າເຂດທຳການຜະລິດ ເຮັດໃຫ້ໄຟໄໝ້ປ່າສະຫງວນ ໂດຍບໍ່ເຈດຕະນາ ຈະຖືກປັບໄໝ**10** ລ້ານ ກີບ**/**ຮຕ**,** ກໍລະນີ ເຈດ ຕະນາແມ່ນປັບໄໝ **20** ລ້ານກີບ**/**ຮຕ ແລະ ປະກອບເອກະສານສົ່ງໃຫ້ເມືອງ ດຳເນີນຕາມຂັ້ນຕອນຂອງກົດໝ າຍ

ລາຍລະອຽດ ລະບຽບ ແລະ ຂໍ້ຫ້າມແມ່ນໄດ້ລະບຸໄວ້ໃນ ກົດລະບຽບການຄຸ້ມຄອງນຳໃຊ້ທີ່ດິນ ແລະ ປ່າໄມ້ ຂັ້ນບ້ານ ຂອງບ້ານ ນາຍາງໃຕ້. ລົງວັນທີ **30** ເດືອນ **8,** ປີ **2024.**

## 3.5. ການປະຕິບັດທີ່ໄດ້ຜົນດີໃນການເຂົ້າເຖິງທີ່ດິນຂອງຊາວບ້ານ ໄດ້ມີການ ປັບປຸງດີຂຶ້ນໂດຍການມີສ່ວນຮ່ວມຜ່ານການເຮັດກິດຈະກຳຂອງອາສາ ສະໝັກນັກສຶກສາກົດໝາຍ

ເນື່ອງຈາກວ່າກິດຈະກຳການເຜີຍແຜ່ຂໍ້ມູນດ້ານກົດໝາຍ ແລະ ກິດຈະກຳປູກຈິດສຳນຶກດ້ານຊັບພະຍາກອນທຳມະຊາດ, ແລະ ສິ່ງແວດລ້ອມ ພ້ອມກັບການສ້າງປ່າສະຫງວນຂອງບ້ານ ຫາກໍ່ສຳເລັດໄປໃນຊ່ວງທ້າຍເດືອນກັນຍາ ປີ**2024,** ການປະຕິບັດທີ່

ໄດ້ຜົນດີໃນການເຂົ້າເຖິງ ແລະ ນຳທີ່ດິນຂອງຊາວບ້ານນາຍາງໃຕ້ແມ່ນຍັງບໍ່ໄດ້ຈັດຕັ້ງປະຕິບັດເປັນຮູບປະທຳເທື່ອ. ແຕ່ໃນເບື້ອງການຮັບຮູ້, ເຊື່ອມຊຶມ ແລະ ນຳໃຊ້ຄວາມຮູ້ແມ່ນໄດ້ປູພື້ນຖານດ້ານກົດໝາຍປ່າໄມ້ ແລະ ຊັບພະຍາກອນທຳມະຊາດ, ກົດໝາຍວ່າດ້ວຍນໍ້າ ແລະ ຊັບພະຍາກອນນໍ້າ, ດຳລັດທີ່ກ່ຽວພັນກັບການດຳລົງຊີວິດຂອງຊາວບ້ານ ແລະ ຄວາມຮູ້ໃນເລື່ອງການປົກປັກຮັກສາແຫຼ່ງນໍ້າ, ຊັບພະຍາກອນນໍ້າ, ການປົກປັກຮັກສາປ່າໄມ້ ແລະ ທຳມະຊາດ ສິ່ງເຫຼົ່ານີ້ຈະຖືກສົ່ງຕໍ່ໃຫ້ລູກຫຼານໄດ້ຮັບຮູ້ ແລະເປັນຄວາມຮູ້ຮອບຕົວທີ່ຈຳເປັນ ແລະ ສຳຄັນຫຼາຍ.

ຊາວບ້ານນາຍາງໃຕ້ກໍ່ພ້ອມທີ່ຈະແລກປ່ຽນ ແລະ ແບ່ງປັນກັບບ້ານອື່ນທີ່ຢູ່ໃກ້ຄຽງ. ຊາວບ້ານທີ່ໄດ້ເຂົ້າຮ່ວມການສຳພາດເກັບກຳຂໍ້ມູນກໍລະນີສຶກສາແມ່ນເວົ້າຄ້າຍຄືກັນວ່າ

"ຄວາມຮູ້ກ່ຽວກັບກົດໝາຍປ່າໄມ້, ກົດໝາຍວ່າດ້ວຍນໍ້າ ແລະ ຄວາມຮູ້ກ່ຽວກັບການປົກປັກຮັກສາປ່າໄມ້ ແລະ ປ່າສະຫງວນຂອງບ້ານຈະຖືກເລົ່າຕໍ່ສູ່ລູກສູ່ຫຼານຟັງເພື່ອໃຫ້ລູກ ຫຼານໄດ້ຮັບຮູ້ ແລະ ມີຄວາມຮູ້ຮອບຕົວໃນການດຳລົງຊີວິດຂອງເຂົາເຈົ້າ" ກຸ່ມແມ່ຍິງ ບ້ານ ນາຍາງໃຕ້ ໄດ້ແລກປ່ຽນຄວາມຄິດເຫັນ ຕໍ່ກັບຄວາມຍືນຍົງຂອງຄວາມຮູ້ ທີ່ເຂົາເຈົ້າໄດ້ຮັບມາ.

ການຈັດຕັ້ງປະຕິບັດໃນການປົກປັກຮັກສາປ່າສະຫງວນແມ່ນຊາວບ້ານມີຄວາມຮັບຮູ້ຫຼາຍ, ມີຄວາມເປັນເຈົ້າການຫຼາຍກວ່າແຕ່ກ່ອນທີ່ທາງທີມອາສານັກສຶກສາກົດໝາຍຈະເຂົ້າມາ. ແລະ ການສົ່ງຕໍ່ຂໍ້ມູນພາຍໃນບ້ານ ແລະ ລະຫວ່າງເພື່ອນບ້ານແມ່ນເປົ້າໝາຍຫຼັກຂອງປະຊາຊົນບ້ານນາຍາງໃຕ້ ຜ່ານການສຳພາດກຸ່ມຍິງ ແລະ ກຸ່ມຊາຍ ພ້ອມກັບການສຳພາດດ່ຽວເຂົາເຈົ້າໄດ້ເລົ່າວ່າ ຊາວບ້ານຮັບຮູ້ເຖິງຜົນເສຍ ແລະ ເຊື່ອມຊຶມເຖິງການ ສູນເສຍຈາກການທຳລາຍປ່າໄມ້ ນັ້ນກໍ່ຄືຈະເຮັດໃຫ້ເກີດມີໄພແຫ້ງແລ້ງ, ນໍ້າບໍ່ພຽງພໍໃຊ້ພາຍໃນບ້ານ, ອາກາດ ຈະຮ້ອນອົບເອົ້າ ແລະ ໄພອຶດຫິວກໍ່ຈະຕາມມາ. ອີກຢ່າງບ້ານນາຍາງໃຕ້ກໍ່ເຄີຍມີໄພທຳມະຊາດເຊັ່ນ ພະຍາດລະບາດຕັກແຕນກິນໃບ. ຖ້າຫາກໃນອານາຄົດຫາກເກີດມີໄພແຫ້ງແລ້ງ ພະຍາດລະບາດຕັກແຕນກິນໃບກໍ່ອາດຈະກັບຄືນມາອີກ. ເຊິ່ງຊາວບ້ານເອງກໍ່ມີຄວາມວິຕົກກັງວົນຢ້ານພະຍາດລະບາດດັ່ງກ່າວນັ້ນມາທຳລາຍຊີວິດການເປັນຢູ່ຂອງຊາວບ້ານອີກຄັ້ງ.

ການເຂົ້າຮ່ວມ ແລະ ການມີສ່ວນຮ່ວມຂອງຊາວບ້ານທຸກຄົນທີ່ເຂົ້າຮ່ວມກອງປະຊຸມໃຫຍ່ລວມບ້ານ ໄດ້ຕົກ ລົງເຫັນດີ ແລະ ໃຫ້ຄວາມຮ່ວມມືກັບການຈັດຕັ້ງບ້ານເພື່ອປະຕິບັດກົດລະບຽບ ແລະ ຂໍ້ຫ້າມຕ່າງໆຂອງປ່າ ສະຫງວນຂອງບ້ານ ພ້ອມກັບຍົກມືຮັບເອົາດ້ວຍຄວາມເຕັມໃຈ ເຊິ່ງມັນໄດ້ສະແດງອອກຜ່ານສີໜ້າທີ່ຍິ້ມແຍ້ມແຈ່ມໃສ ບວກກັບຄຳເວົ້າທີ່ວ່າ **"ຕົກລົງ ເຫັນດີເປັນເອກະພາບ"** ແລ້ວກໍ່ມີການຕົບມືເພື່ອຍິນດີ ແລະ ດີໃຈກັບບາດກ້າວຕໍ່ໄປທີ່ທາງປະຊາຊົນບ້ານນາຍາງໃຕ້ຈະໄດ້ຮັບ ແລະ ເຮັດຮ່ວມກັນກັບທາງຂັ້ນເມືອງໃນວຽກງານຄຸ້ມຄອງປ່າສະຫງວນບ້ານໃຫ້ມີຄວາມຍືນຍົງ.



ອົງການບ້ານຈຸດສຸມສາກົນ, ບ້ານ ໂພນສະຫວັນໃຕ້, ຮ່ອມ 14, ເຮືອນເລກທີ 207,
ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ໂທ/Tel: +856 021 312 519, ແຟກ/Fax: +856 021 315 841
ເວັບໄຊທ໌/Website: www.villagefocus.org

"ໃນເມື່ອກ່ອນບ້ານນາຍາງໃຕ້ເຄີຍມີໄພແຫ້ງແລ້ງ ແລະກໍ່ເຄີຍເກີດມີພະຍາດລະບາດຕັກແຕນກິນໃບ ມັນເຄີຍເກີດຂຶ້ນທຸກປີໃນຊ່ວງເດືອນ ກໍລະກົດ ຫາ ເດືອນ ສິງຫາ. ແຕ່ວ່າພະຍາດລະບາດຕັກແຕນກິນໃບນີ້ກໍ່ໄດ້ຫາຍໄປຈາກຊາວບ້ານນາຍາງໃຕ້ໄດ້ ຫຼາຍປີພໍສົມຄວນ. ຖ້າຫາກວ່າໃນຕໍ່ໜ້າ ຊາວບ້ານບໍ່ມີການປົກປັກຮັກສາປ່າໄມ້ໄວ້ ຫາກເກີດມີໄພແຫ້ງແລ້ງອີກຄັ້ງ ຂ້າພະເຈົ້າຄິດວ່າພະຍາດລະບາດດັ່ງກ່າວນັ້ນຈະກັບຄືນມາອີກແນ່ນອນ. ສະນັ້ນ, ການປູກປ່າເພື່ອຟື້ນຟູປ່າໄມ້ ແລະເພື່ອຮັກສາແຫຼ່ງນໍ້າໃຫ້ມີຄວາມຊຸ່ມຊື່ນ ແມ່ນມີຄວາມຈຳເປັນຫຼາຍ ແລະ ປັດຈຸບັນທາງໂຄງການໄລຟ໌ ກໍ່ໄດ້ມາຊ່ວຍລຸດຜ່ອນໄພແລ້ງໂດຍຜ່ານການເຮັດກິດຈະກຳຂອງອາສາສະໝັກ ນັກສຶກ ສາກົດໝາຍ" ທ່ານ ສຸລິຍັນ ວິຊາການຈາກຫ້ອງການຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມເມືອງນໍ້າບາກ.

ການຮັບຮູ້ກ່ຽວກັບຄວາມໝາຍ ແລະ ຄວາມສຳຄັນໃນການປົກປັກຮັກສາປ່າສະຫງວນແມ່ນມີຜົນປະໂຫຍດ ຫຼາຍຢ່າງແກ່ຊາວບ້ານໝົດທຸກຄົນ ແລະ ຍັງມີຜົນປະໂຫຍດຕໍ່ປະເທດຊາດບ້ານເມືອງ. ດັ່ງຄຳເວົ້າຂອງ ທ່ານ ໄມຄຳມອນ ແກ້ວອຸດົມ ນາຍບ້ານບ້ານນາຍາງໃຕ້ ທີ່ວ່າ:

"ການທີ່ພວກເຮົາອານຸລັກປ່າສະຫງວນແຫ່ງນີ້ໄວ້ ມັນບໍ່ແມ່ນເພື່ອຊາວບ້ານ, ບໍ່ແມ່ນເພື່ອລູກຫຼານຂອງພວກເຮົາພຽງຢ່າງດຽວ ແຕ່ມັນເປັນການອານຸລັກໄວ້ໃຫ້ປະເທດຊາດບ້ານເມືອງ, ໃຫ້ຄົນທັງຫຼາຍໄດ້ເບິ່ງໄດ້ຊົມ ແລະໄດ້ມີອາກາດທີ່ເຢັນຊະບາຍ. ປ່າຕຶບໜາ, ອາກາດດີ ແລະ ມີນໍ້າໃຊ້ຕະຫຼອດໄປ ນີ້ຄືຄວາມຍີນຍົງ ແລະສິ່ງປ່ຽນແປງທີ່ພວກເຮົາຫວັງວ່າມັນຈະຕ້ອງເກີດຂຶ້ນຫຼັງຈາກເຮົາໄດ້ມີປ່າສະຫງວນແລ້ວ" ທ່ານ ໄມຄຳມອນ ແກ້ວອຸດົມ ນາຍບ້ານ ບ້ານນາຍາງໃຕ້

ການຮັບຮູ້ກ່ຽວກັບຄວາມໝາຍ ແລະ ຄວາມສຳຄັນໃນການປົກປັກຮັກສາປ່າໄມ້ ບວກກັບລະບຽບການຄຸ້ມ ຄອງປ່າໄມ້ ແລະຂໍ້ຫ້າມຕ່າງໆທີ່ທາງອາສາສະໝັກນັກສຶກສາກົດໝາຍຈາກໂຄງການໄລຟ໌ ໄດ້ນຳມາເຜີຍແຜ່ ແລະປູກຈິດສຳນຶກໃຫ້ກັບຊາວບ້ານ. ສິ່ງນີ້ໄດ້ກໍ່ໃຫ້ເກີດຄວາມຕື່ນຕົວໃນການເປັນເຈົ້າການ ແລະ ມີຄວາມຮັບຜິດຊອບຂອງແຕ່ລະພາກສ່ວນເພື່ອຊ່ວຍກັນປົກປັກຮັກສາປ່າໄມ້ ແລະ ຍັງເປັນການສະໜັບສະໜູນນະໂຍບາຍຂອງລັດຖະບານນຳອີກ. ອັນນີ້ແມ່ນຜົນງານອັນຍິ່ງໃຫຍ່ທີ່ກຸ່ມອາສາສະໝັກນັກສຶກສາກົດໝາຍໄດ້ສ້າງຂຶ້ນນັ້ນກໍ່ຄືວຽກງານທີ່ເຂົາເຈົ້າໄດ້ຈັດຕັ້ງປະຕິບັດໃນບ້ານນາຍາງໃຕ້ນັ້ນໄດ້ຕອບສະໜອງຄວາມຕ້ອງການຂອງຊາວບ້ານ, ການຈັດຕັ້ງບ້ານ ແລະ ຍັງໄດ້ຕອບໂຈດນະໂຍບາຍຂອງລັດຖະບານນຳອີກ. ດັ່ງຄຳຄິດເຫັນຂອງ ທ່ານ ສົມເພັດ ວິຊາການຈາກຫ້ອງວ່າການປົກຄອງເມືອງນໍ້າບາກ ໄດ້ກ່າວມາວ່າ:

"ທຸກກິດຈະກຳຂອງໂຄງການໄລຟ໌ ແມ່ນມີຄວາມສຳຄັນຫຼາຍ ແລະຫຼັກໆແມ່ນ ກິດຈະກຳທີ່ໄດ້ລົງປະຕິບັດຕົວຈິງໃນການກຳນົດເຂດປ່າສະຫງວນໃນບ້ານນາຍາງໃຕ້ ເພາະວ່າມັນເປັນການຈັດຕັ້ງ-ຜັນຂະຫຍາຍແນວທາງ ແລະ ນະໂຍບາຍຂອງພັກ ແລະລະບຽບກົດໝາຍຂອງລັດໂດຍສະເພາະ ແມ່ນຄຳສັ່ງເລກທີ 11 ຂອງທ່ານນາຍົກກ່ຽວກັບເພີ່ມຄວາມເຂັ້ມງວດໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາການນຳໃຊ້ທີ່ດິນ ແລະ ປ່າໄມ້. ອີກຢ່າງໜຶ່ງກໍ່ເຫັນວ່າສອດຄ່ອງກັບແຜນພັດທະນາເສດຖະກິດຂອງບ້ານ ແລະ ແຜນພັດທະນາເສດຖະກິດຂອງເມືອງ ໂດຍສະເພາະແມ່ນຄາດໝາຍສູ້ຊົນການສ້າງປ່າປົກຄຸມໃຫ້ກວມ 70 ເປີເຊັນໃນທົ່ວເມືອງ. ແລະ ອີກອັນໜຶ່ງກໍ່ເປັນການປູກຈິດສຳນຶກໃຫ້ພໍ່ແມ່ປະຊາຊົນຮັບຮູ້ໄດ້ເຖິງຄວາມໝາຍຄວາມສຳຄັນຂອງປ່າໄມ້ພ້ອມນັ້ນກໍ່ຍັງໄດ້ໃຫ້ຊາວ ບ້ານຮັບຮູ້ຕື່ມວ່າ ການປົກປັກຮັກສາປ່າໄມ້ແມ່ນສິດ ພາລະບົດບາດຂອງໃຜ ອັນນີ້ແມ່ນມີຄວາມໝາຍສຳຄັນຫຼາຍ. ໂຄງການນີ້ໄດ້ເຂົ້າມາ ແລະ ໄດ້ຕອບໂຈດຄວາມຕ້ອງການຂອງເມືອງນ້ຳບາກ ເພື່ອການຟື້ນຟູປ່າໄມ້ຢູ່ບ້ານນາຍາງໃຕ້ ແລະ ໄປຕາມແຜນພັດທະນາເສດຖະກິດຂອງບ້ານ ແລະຂອງເມືອງ" ທ່ານ ສົມເພັດ ວິຊາການ ຈາກຫ້ອງວ່າການ ເມືອງນ້ຳບາກ.

ຜົນງານຈາກການມີສ່ວນຮ່ວມໃນການຈັດຕັ້ງປະຕິບັດກິດຈະກຳທີ່ຊາວບ້ານຢາກຍົກໃຫ້ເຫັນຜ່ານກຳລະນີສຶກສານີ້ກໍ່ຄື ທີມອາສານັກສຶກສາກົດໝາຍຈາກໂຄງການໄລຟ໌ໄດ້ມາຈຸດປະກາຍໃນບ້ານນາຍາງໃຕ້ກໍ່ຄື ຄວາມກະ ຕືລືລົ້ນ, ເກີດມີແຮງບັນດານໃຈໃນການມີຈິດສຳນຶກທີ່ ຈະປົກປັກຮັກສາປ່າສະຫງວນຂອງຊາວບ້ານນາຍາງໃຕ້, ຄວາມຫວັງ ແລະ ຄວາມສຸກພ້ອມກັບຮອຍຍິ້ມຂອງຊາວບ້ານໄດ້ເບິ່ງບານອີກຄັ້ງນັ້ນກໍ່ຄືການທີ່ໄດ້ມີປ່າສະ ຫງວນທີ່ມີຄວາມຊັດເຈນກວ່າເກົ່າ ແລະ ມີສ່ວນຮ່ວມຂອງຊາວບ້ານຕັ້ງແຕ່ຕົ້ນຈົນຈົບໂຄງການ.

"ພວກນ້ອງຮູ້ສຶກພາກພູມໃຈຫຼາຍໃນການເປັນສ່ວນໜຶ່ງໃນການສ້າງປ່າສະຫງວນຂອງບ້ານ ຄຽງຄູ່ກັບ ການປົກປັກຮັກສາປ່າໄມ້, ຮັກສາ ສິ່ງແວດລ້ອມ ແລະ ຖືເປັນຜົນສຳເລັດອັນຍິ່ງໃຫຍ່ໃນການເຮັດກິດ ຈະກຳໃນຄັ້ງນີ້. ອັນນີ້ເປັນຜົນສຳເລັດ ແລະ ເປັນຄວາມພູມໃຈທີ່ພວກນ້ອງທີມອາສາສະໝັກນັກສຶກສາກົດໝາຍຈະບໍ່ມີວັນລືມ ແຕ່ຈະຈົດຈຳມັນໄວ້ຕະຫຼອດໄປ. ນອກຈາກໄດ້ນຳພາຊາວບ້ານເຮັດກິດຈະກຳແລ້ວ ມັນກໍ່ຍັງເປັນບົດຮຽນຮູ້ທີ່ພວກນ້ອງທີມອາສາຕັ້ງໃຈເຮັດຮ່ວມກັນ ມັນໄດ້ກໍ່ໃຫ້ເກີດມີ ຮອຍຍິ້ມຂອງຊາວບ້ານຫຼາຍໆຄົນ" ກຸ່ມອາສາສະໝັກນັກສຶກສາກົດໝາຍຈາກໂຄງການໄລຟ໌ ແລກປ່ຽນຄວາມຮູ້ສຶກ ແລະຄວາມພາກພູມໃຈຂອງຕົນທີ່ໄດ້ເປັນສ່ວນໜຶ່ງຂອງການປ່ຽນແປງໃນຊຸມຊົນ ບ້ານນາຍາງໃຕ້ແຫ່ງນີ້.

"ຜ່ານການທີ່ໄດ້ຮຽນຮູ້ພາກທິດສະດີກ່ຽວກັບກົດໝາຍທີ່ພວກນ້ອງໄດ້ຮຽນຢູ່ໃນຫ້ອງຮຽນ ມາບວກກັບວິທີການ ແລະ ເຄື່ອງມືຕ່າງໆທີ່ໄດ້ຮຽນຮູ້ຈາກການຝຶກອົບຮົມຈາກຄູຝຶກທີ່ມີປະສົບການທີ່ຫຼາກຫຼາຍ ພວກນ້ອງໄດ້ລົງນຳໃຊ້ທັງພາກທິດສະດີບວກກັບວິທີການຕ່າງໆແລ້ວ ການຈັດຕັ້ງປະຕິບັດຕົວຈິງຢູ່ຂັ້ນບ້ານນຳຊຸມຊົນ ເຮັດໃຫ້ພວກນ້ອງໄດ້ຮູ້ວ່າວິທີການຕ່າງໆທີ່ໄດ້ຮັບຜ່ານການເປັນອາສາສະໝັກນັກສຶກສາກົດໝາຍນຳໂຄງການໄລຟ໌ ພວກນ້ອງຈະນຳໃຊ້ວິທີການເປັນຜູ້ອຳນວຍຄວາມສະດວກທີ່ຫຼາກຫຼາຍ, ຈະນຳໃຊ້ທັກສະການເວົ້າ, ທັກສະການຟັງທີ່ດີ, ແລະ ການເຮັດວຽກຮ່ວມກັນໂດຍນຳໃຊ້ S.M.A.R.T

ເພື່ອຄວາມລົງຕົວ ແລະ ເປັນການວາງແຜນທີ່ຊັດເຈນກ່ອນການເຮັດວຽກງານໃດໜຶ່ງ. ວິທີການ ແລະ ທັກສະດັ່ງກ່າວແມ່ນພວກນ້ອງເຫັນວ່າມັນມີຄວາມສຳຄັນ ແລະ ໄດ້ຜົນດີ. ສະນັ້ນ, ບໍ່ວ່າຈະຮຽນຕໍ່ ຫຼືເຮັດວຽກນຳອົງກອນໃດກໍ່ຕາມ ພວກນ້ອງຈະນຳໃຊ້ມັນ ແລະ ມັນຈະຝັງຢູ່ໃນຕົວຂອງພວກນ້ອງຕະຫຼອດໄປ ເພາະວ່າມັນໄດ້ກາຍເປັນສ່ວນໜຶ່ງໃນການດຳລົງຊີວິດຂອງພວກນ້ອງແລ້ວ" ກຸ່ມອາສາສະໝັກນັກສຶກສາກົດໝາຍ ລຸ່ນທີ່ສາມຂອງໂຄງການໄລຟ໌ ໄດ້ແລກປ່ຽນຄວາມຮູ້ສຶກ ແລະ ແຜນໃນການນຳໃຊ້ທັກສະ ແລະ ຄວາມຮູ້ ບວກກັບວິທີການທີ່ເຂົາເຈົ້າໄດ້ຮຽນຮູ້ຈາກການເປັນອາສາສະໝັກນຳໂຄງການໄລຟ໌ ທີ່ຜ່ານມາ.

ຜ່ານການໂອ້ລົມກ່ຽວກັບຄວາມຍືນຍົງໃນການປົກປັກຮັກສາປ່າສະຫງວນຂອງບ້ານໄວ້ໃຫ້ຢູ່ຄຽງຄູ່ບ້ານນາຍາງໃຕ້ໄປຈົນຮອດເສັ້ນລູກ, ຫຼານ, ເຫຼນ ແລະ ລ່ອນ ຫຼັງຈາກສິ້ນສຸດການສະໜັບສະໜູນຊ່ວຍເຫຼືອຂອງໂຄງການໄລຟ໌. ຊາວບ້ານ, ຄະນະກຳມະການຄຸ້ມຄອງປ່າສະຫງວນຂອງບ້ານ, ການຈັດຕັ້ງບ້ານ ແລະ ວິຊາການຈາກຂັ້ນເມືອງ. ກໍ່ໄດ້ເຂົ້າໃຈເຖິງເຈດຈຳນົງ ແລະ ຄວາມຫ້າວຫັນໃນການປົກປັກຮັກສາປ່າສະຫງວນແຫ່ງນີ້ໄວ້ ເຊິ່ງສະແດງອອກໃນຄຳເວົ້າຂອງແຕ່ລະພາກສ່ວນເຊັ່ນ:

> "ການອານຸລັກປົກປັກຮັກສາປ່າສະຫງວນຂອງບ້ານ ແມ່ນພັນທະ ແລະ ຄວາມຮັບຜິດຊອບຂອງ ຊາວບ້ານໝົດທຸກຄົນ ຕະຫຼອດຮອດອົງການຈັດຕັ້ງບ້ານ. ທຸກຄົນເປັນເຈົ້າການປົກປັກຮັກສາຊ່ວຍ ກັນມັນຈິ່ງມີຄວາມຍືນຍົງໄດ້" ກຸ່ມແມ່ຍິງ ແລະ ກຸ່ມຊາຍ ບ້ານ ນາຍາງໃຕ້.

ເມື່ອປ່າສະຫງວນແຫ່ງນີ້ເປັນບ່ອນດຽວທີ່ມີປ່າໄມ້ຫຼົງເຫຼືອຢູ່ໃນບ້ານນາຍາງໃຕ້ ຈິ່ງເປັນສາເຫດທີ່ເຮັດໃຫ້ຊາວບ້ານໝົດທຸກຄົນມີຄວາມຕື່ນຕົວໃນການເປັນເຈົ້າການປົກປັກຮັກສາປ່າສະຫງວນນີ້ໄວ້ໃຫ້ມີຄວາມຍືນຍົງ. ຊາວບ້ານ ແລະ ການຈັດຕັ້ງບ້ານມີວິໄສທັດທີ່ດີຕໍ່ກັບ ການປ່ຽນແປງທີ່ຈະເກີດຂຶ້ນໃນອານາຄົດ.

> "ພາຍຫຼັງການສະໜັບສະໜູນຂອງໂຄງການໄລຟ໌ ໄດ້ສິ້ນສຸດໄປ, ພັນທະຂອງເມືອງກໍ່ຄື ພວກເຮົາຈະໄດ້ລົງໄປຊຸກຍູ້ຕິດຕາມນຳການຈັດຕັ້ງບ້ານ ແລະ ນຳຄະນະຄຸ້ມຄອງປ່າໄມ້ບ້ານ ໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງແຕ່ລະພາກສ່ວນເພື່ອໃຫ້ເຂົາເຈົ້າປະຕິບັດຕາມໜ້າທີ່ຮັບຜິດຊອບຂອງຕົນຕາມແຕ່ລະໄລຍະ ແລະ ເປັນປົກກະຕິ. ເວົ້າລວມແລ້ວກໍ່ຄືພັນທະຂອງເມືອງຕ້ອງໄດ້ເຮັດຮ່ວມກັບບ້ານ ມັນຈິ່ງຈະມີຄວາມຍືນຍົງໄດ້. ນອກຈາກນີ້, ທາງເມືອງ ແລະ ການຈັດຕັ້ງບ້ານກໍ່ຈະໄດ້ເອົາກົດລະບຽບການຄຸ້ມຄອງປ່າໄມ້ ແລະ ຂໍ້ຫ້າມຕ່າງໆພ້ອມກັບຂໍ້ຕົກລົງຂອງເຈົ້າເມືອງມາເປັນບ່ອນອີງໃນການຈັດຕັ້ງປະຕິບັດຕໍ່ກັບຜູ້ລະເມີດ ຫຼືຜູ້ບຸກລຸກປ່າສະຫງວນ" ທ່ານ ສົມເພັດ ວິຊາການຈາກຫ້ອງວ່າ ການ ເມືອງນ້ຳບາກ.

ທາງວິຊາການຈາກຫ້ອງການຊັບເມືອງນ້ຳບາກ ກໍ່ໄດ້ປະກອບສ່ວນໃນຄຳຄິດເຫັນຕໍ່ກັບຄວາມຍືນຍົງຂອງປ່າສະ ຫງວນ ເພື່ອຫັດກຸ່ມ ແລະ ໃຫ້ມີຜົນສັກສິດຂຶ້ນກວ່າເກົ່າ.


ອົງການບ້ານຈຸດສຸມສາກົນ, ບ້ານ ໂພນສະຫວັນໃຕ້, ຮ່ອມ 14, ເຮືອນເລກທີ 207,
ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ໂທ/Tel: +856 021 312 519, ແຟກ/Fax: +856 021 315 841
ເວັບໄຊທ໌/Website: www.villagefocus.org

# 4. ຂັ້ນຕອນການສ້າງປ່າສະຫງວນຂອງບ້ານ

## 4.1. ຂັ້ນຕອນການສ້າງປ່າສະຫງວນຂອງບ້ານ ນາຍາງໃຕ້



ກ່ອນຈະສາມາດກຳນົດ ຫຼືສ້າງປ່າສະຫງວນຂອງບ້ານໄດ້ກໍ່ຕ້ອງເລີ່ມຈາກປະຊາຊົນໃນບ້ານກ່ອນວ່າເຂົາເຈົ້າມີຄວາມຕ້ອງການປ່າສະຫງວນແທ້ບໍ? ປະຊາຊົນມີເຫດຜົນຫຍັງຈຶ່ງຢາກຈະສ້າງປ່າສະຫງວນຂອງບ້ານ? ແລ້ວປະຊາຊົນຈະເປັນຈິດໜຶ່ງໃຈດຽວໃນການເປັນເຈົ້າການປົກປັກຮັກສາປ່າສະຫງວນຂອງບ້ານຮ່ວມກັນໃຫ້ມີຄວາມຍືນຍົງບໍ? ຖ້າມີຄວາມພ້ອມດັ່ງກ່າວ ກໍ່ສາມາດກຳນົດຂອບເຂດ ແລະ ສ້າງປ່າສະຫງວນຂອງບ້ານໄດ້. ນອກຈາກນັ້ນ ກໍ່ໄດ້ມີການວາງແຜນຈັດສັນປ່າໄມ້ ຕາມການແບ່ງເຂດປະເພດປ່າໄມ້ຄື: ປ່າປ້ອງກັນ, ປ່າສະ ຫງວນ ແລະ ປ່າຜະລິດ ໂດຍອີງໃສ່ຂໍ້ມູນການສຳຫຼວດຕົວຈິງ ແນໃສ່ຮັບປະກັນຄວາມສົມດຸນຂອງລະບົບ ນິເວດປ່າໄມ້, ການນຳໃຊ້ປ່າໄມ້ ແລະ ເຄື່ອງປ່າຂອງດົງແບບບໍ່ດັບສູນ, ການມີສ່ວນຮ່ວມຂອງປະຊາຊົນ ໃນ ການຄຸ້ມຄອງປ່າໄມ້ຕາມແຜນຈັດສັນທີ່ລັດໄດ້ກຳນົດ.

ມີການວາງແຜນຈັດສັນປ່າໄມ້ຂັ້ນບ້ານ, ແມ່ນການຈັດສັນປ່າໄມ້ ແລະທີ່ດິນປ່າໄມ້ໃນເຂດການປົກຄອງຂອງ ບ້ານ ເຊິ່ງດຳເນີນທັງຢູ່ໃນ ແລະ ນອກເຂດປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດເພື່ອໃຫ້ບ້ານເປັນເຈົ້າ ການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ຟື້ນຟູປ່າໄມ້ທີ່ຊຸດ ໂຊມ, ຕ້ານຫຼືສະກັດກັ້ນໄຟລາມປ່າ, ການບຸກລຸກ ປ່າໄມ້ ແລະ ທີ່ດິນປ່າໄມ້ ແນໃສ່ເຮັດໃຫ້ປ່າໄມ້ໃນເຂດຄຸ້ມຄອງຂອງ ບ້ານ ມີຄວາມອຸດົມ ສົມບູນ ແລະ ກາຍ ເປັນບ້ານພັດທະນາດ້ານປ່າໄມ້. ແລະ ຂາດບໍ່ໄດ້ນັ້ນກໍ່ຄື ການມີສ່ວນຮ່ວມຂອງຊຸມຊົນ, ໃນການຈັດສັນຄຸ້ມ ຄອງຊັບພະຍາກອນປ່າໄມ້ບ້ານ ຈະເນັ້ນການມີສ່ວນຮ່ວມຂອງຊາວບ້ານເປັນຫຼັກ ເພາະເຂົາເຈົ້າເປັນທັງຜູ້ຄຸ້ມ ຄອງປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ປ່າໄມ້. ສະນັ້ນ, ຊາວບ້ານຕ້ອງເປັນຜູ້ຕັດສິນໃຈກ່ຽວກັບການກຳ ນົດເຂດຈັດສັນ, ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ແບບຍືນຍົງ.

ສະນັ້ນ, ໂດຍພື້ນຖານແລ້ວມີຂັ້ນຕອນການກຳນົດຂອບເຂດ ແລະ ການສ້າງປ່າສະຫງວນຂອງບ້ານດັ່ງນີ້:

1. ການຈັດຕັ້ງບ້ານ ຂຽນບົດສະເໜີຂໍສ້າງປ່າສະຫງວນຂອງບ້ານ ແລ້ວສົ່ງມາຫາທາງຫ້ອງການກະສິກຳ ເມືອງ, ຫຼັງຈາກນັ້ນທາງຫ້ອງການກະສິກຳຮ່ວມກັບຂະແໜງການທີ່ກ່ຽວຂ້ອງຈະຮັບເອົາມາພິຈາລະນາ ພ້ອມເບິ່ງເຫດຜົນຈາກຂັ້ນບ້ານ.
2. ດຳເນີນການສຳຫຼວດເກັບກຳຂໍ້ມູນກ່ຽວກັບຄຸນລັກສະນະທາງດ້ານພູມສາດ, ປະຫວັດສາດ, ວັດທະ ນະທຳ ແລະ ທຳມະຊາດ,ສະພາບປ່າໄມ້, ແຫຼ່ງນ້ຳ ແລະ ເສດຖະກິດສັງຄົມຂອງບ້ານທີ່ມີພື້ນທີ່ຢູ່ໃນ ແລະ ອ້ອມເຂດພື້ນທີ່ຈະກຳນົດເປັນເຂດປ່າສະຫງວນ ໂດຍນຳໃຊ້ **GPS** , **Google earth** ເພື່ອ ຈັບຈຸດພິກັດ ເພື່ອເອົາຂໍ້ມູນມາສ້າງແຜນທີ່ສະແດງຂອບເຂດ
3. ປະຊຸມລະຫວ່າງຄະນະກຳມະການຄຸ້ມຄອງປ່າໄມ້ບ້ານ, ການຈັດຕັ້ງບ້ານ, ວິຊາການຈາກຂັ້ນເມືອງ, ແລະ ພະນັກງານໂຄງການ(ທີ່ໃຫ້ການສະໜັບສະໜູນຊ່ວຍເຫຼືອດ້ານທຶນຮອນ) ເພື່ອຮັບຮູ້ຮ່ວມກັນ ລະຫວ່າງຈຸດເຂດແດນແຕ່ລະຈຸດ , ເພື່ອແຕ້ມຮ່າງແຜນທີ່, ຮ່າງຂໍ້ຕົກລົງ, ແລະ ຮ່າງລະບຽບການຄຸ້ມຄອງປ່າສະຫງວນຂອງບ້ານ


ອົງການບ້ານຈຸດສຸມສາກົນ, ບ້ານ ໂພນສະຫວັນໃຕ້, ຮ່ອມ 14, ເຮືອນເລກທີ 207,
ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ໂທ/Tel: +856 021 312 519, ແຟກ/Fax: +856 021 315 841
ເວັບໄຊທ໌/Website: www.villagefocus.org

4. ສ້າງແຜນທີ່ສະແດງຂອບເຂດທີ່ຕັ້ງ ແລະ ຂໍ້ມູນຈາກການສໍາຫຼວດເປັນຕົ້ນ, ຂໍ້ມູນສະພາບປ່າໄມ້, ຫ້ວຍນໍ້າ ແລະ ແຫຼ່ງນໍ້າ
5. ເປີດກອງປະຊຸມປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງເປັນຕົ້ນແມ່ນຂະແໜງການ, ອົງການປົກຄອງ ທ້ອງຖິ່ນ ແລະ ປະຊາຊົນ ເພື່ອຄວາມເປັນເອກະພາບ. ໂດຍມີປະຊາຊົນທັງໝົດທີ່ສະດວກໃນການເຂົ້າຮ່ວມໂດຍສະເພາະແມ່ນ ຄອບຄົວ ຫຼື ບຸກຄົນທີ່ມີສວນ ຫຼືທໍາການຜະລິດໃກ້ກັບເຂດປ່າສະ ຫງວນ, ການຈັດຕັ້ງບ້ານ, ເຖົ້າແກ່ແນວໂຮມ, ຄະນະກໍາມະການຄຸ້ມຄອງປ່າໄມ້ບ້ານ, ທ່ານເຈົ້າເມືອງ, ວິຊາການຈາກເມືອງ ແລະ ພະນັກງານໂຄງການທີ່ໃຫ້ຄວາມຊ່ວຍເຫຼືອດ້ານທຶນຮອນ ເພື່ອນໍາສະເໜີ ຜ່ານພໍ່ແມ່ ປະຊາຊົນໃຫ້ຮັບຮູ້ຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດວຽກງານໃນການສ້າງປ່າສະຫງວນຂອງບ້ານ ແລະ ເພື່ອໃຫ້ຊາວບ້ານໝົດທຸກຄົນປະກອບຄໍາຄິດເຫັນຕໍ່ບົດເລົ່າ, ແລະ ຕໍ່ຮ່າງລະ ບຽບຄຸ້ມຄອງປ່າສະຫງວນ ທີ່ອີງໃສ່ກົດໝາຍຂອງຂະແໜງປ່າໄມ້ ແລະ ຊາວບ້ານ ສາມາດນໍາສະເໜີ ແລະ ປະກອບຄໍາຄິດເຫັນເພື່ອປັບປຸງ ແລະ ເຮັດໃຫ້ມັນສົມບູນຂຶ້ນ
6. ອົງການຈັດຕັ້ງບ້ານຂຽນບົດສະເໜີຂໍຂຶ້ນທະບຽນທີ່ດິນປ່າສະຫງວນຂອງບ້ານ ຫາອົງການທີ່ມີສິດອໍາ ນາດພິຈາລະນາຮັບຮອງ ນັ້ນກໍ່ຄື ຫ້ອງການກະສິກໍາ, ຫ້ອງການຊັບ ແລ້ວສອງຫ້ອງການດັ່ງກ່າວຈະ ຮ່ວມກັນພິຈາລະນາ ແລະ ສະເໜີຫາ ທ່ານເຈົ້າເມືອງ ເພື່ອອະນຸມັດ ແລະ ລົງລາຍເຊັນຮັບຮອງເອົາປ່າສະຫງວນຂອງບ້ານຢ່າງເປັນທາງການ.

## 5. ສະຫຼຸບລວມ

ການຈັດຕັ້ງປະຕິບັດກິດຈະກໍາຂອງກຸ່ມອາສາສະໝັກນັກສຶກສາກົດໝາຍລຸ່ນທີ່ສາມຂອງໂຄງການໄລຟ໌ ແມ່ນ ໄດ້ສ້າງຄວາມປ່ຽນແປງ ແລະ ສ້າງຜົນປະໂຫຍດຕໍ່ກັບຄວາມຕ້ອງການຂອງຊາວບ້ານ ນາຍາງໃຕ້ ຢ່າງແທ້ຈິງ. ການເກັບກໍາ ແລະ ລວບລວມເອົາບັນຫາທີ່ເກີດຂຶ້ນຢູ່ພາຍໃນບ້ານ ເພື່ອມາວິເຄາະ ແລະ ຊອກຫາວິທີແກ້ໄຂຢ່າງຕໍ່ເນື່ອງ ເຮັດໃຫ້ບັນຫາທັງໝົດຖືກນໍາມາວິເຄາະ ແລະ ບຸລິມະສິດຮ່ວມກັນກັບຊາວບ້ານ, ການຈັດຕັ້ງບ້ານ ເຖົ້າແກ່ແນວໂຮມ ເພື່ອແກ້ໄຂແຕ່ລະບັນຫາໃຫ້ກົງກັບຄວາມຕ້ອງການຂອງບ້ານ. ສືບເນື່ອງຈາກການຈັດຕັ້ງປະຕິບັດກິດຈະກໍາຄັ້ງທີ່ໜຶ່ງ ຈິ່ງເຮັດໃຫ້ມີກິດຈະກໍາຄັ້ງທີ່ສອງ ນັ້ນກໍ່ຄື ການເຜີຍແຜ່ຂໍ້ມູນກົດໝາຍ ພ້ອມກັບປູກຈິດສໍານຶກໃຫ້ແກ່ພໍ່ແມ່ ປະຊາຊົນບ້ານ ນາຍາງໃຕ້ ໃຫ້ເຂົາເຈົ້າຮັບຮູ້ເຖິງສິດ, ໜ້າທີ່ ແລະ ພັນທະຄວາມຮັບຜິດຊອບໃນການປົກປັກຮັກສາປ່າໄມ້ ແລະ ສິ່ງແວດລ້ອມພາຍໃນບ້ານຂອງເຂົາເຈົ້າແມ່ນມີຄວາມຈໍາເປັນ ແລະ ສໍາຄັນຫຼາຍ. ຊາວບ້ານໃຫ້ຄວາມສົນໃຈໃນຫົວຂໍ້ກິດຈະກໍາທີ່ທາງກຸ່ມອາສາສະໝັກນັກສຶກສາກົດໝາຍ ໄດ້ນໍາພາຈັດຕັ້ງປະຕິບັດ ດ້ວຍຄວາມກະຕືລືລົ້ນ ແລະ ຫ້າວຫັນໃນການສະໜັບສະໜູນ ແລະ ເອື້ອອໍານວຍຄວາມສະດວກຂອງວິຊາການຈາກຂັ້ນເມືອງ ບວກກັບແຮງພັກດັນ ແລະ ຄວາມເອົາໃຈໃສ່ຈາກທາງການຈັດຕັ້ງບ້ານ ແລະ ຊາວບ້ານທຸກຄົນ.

ເຖິງແມ່ນວ່າຍັງມີຊາວບ້ານບາງຄອບຄົວ ແລະ ບາງຄົນບໍ່ສາມາດຈື່ໄດ້ກ່ຽວກັບມາດຕາກົດໝາຍທີ່ທາງກຸ່ມອາສາສະໝັກນັກສຶກສາກົດໝາຍໄດ້ມາເຜີຍແຜ່ແລ້ວກໍ່ຕາມ ຍັງມີໂປສ໌ເຕີທີ່ມີມາດຕາກົດໝາຍຕ່າງໆ, ໂປສ໌ເຕີກ່ຽວກັບການປົກປັກຮັກສາປ່າໄມ້, ປົກປັກຮັກສາແຫຼ່ງນໍ້າ ແລະສິ່ງແວດລ້ອມ ທີ່ຊາວບ້ານ ແລະ ການຈັດຕັ້ງບ້ານ ສາມາດກັບໄປອ່ານເບິ່ງຄືນ ຫຼືຖາມຄົນທີ່ເຄີຍເຂົ້າຮ່ວມກິດຈະກໍານັ້ນໄດ້ ເພາະວ່າຍັງມີອີກຫຼາຍຄົນທີ່ສາມາດຈື່ມາດຕາກົດໝາຍຕ່າງໆໄດ້ ມັນສະແດງອອກໃນເວລາກຸ່ມອາສາສະໝັກນັກສຶກສາກົດໝາຍໄດ້ທວນຄືນກິດຈະກໍາໂດຍການ ຖາມ ແລະ ຕອບ ແບບອັດຕາໄນ ແລ້ວຊາວບ້ານຫຼາຍຄົນໄດ້ຮັບລາງວັນ ນັ້ນສະແດງວ່າເຂົາເຈົ້າຕອບຖືກ ແລະ ຍັງຈື່ບົດຮຽນທີ່ຜ່ານມາ. ແລະ ຊາວບ້ານກໍ່ມີຄວາມພ້ອມໃນການແລກປ່ຽນ ແລະ ສົ່ງຕໍ່ຄວາມຮູ້ກ່ຽວກັບກົດໝາຍປ່າໄມ້, ແລະ ກົດໝາຍທີ່ດິນ ໃຫ້ກັບລຸ່ນຕໍ່ໄປ ແລະໃຫ້ກັບບ້ານອື່ນທີ່ຢູ່ໃກ້ຄຽງ.

ຫຼັງຈາກສິ້ນສຸດກິດຈະກໍາຄັ້ງທີ່ສາມ ນັ້ນກໍ່ຄື ການກໍານົດ ແລະ ສ້າງປ່າສະຫງວນຂອງບ້ານນາຍາງໃຕ້. ຊາວບ້ານ, ການຈັດຕັ້ງບ້ານ ແລະ ວິຊາການຈາກຂັ້ນເມືອງ ຕ່າງກໍ່ຮັບຮູ້, ເຊື່ອມຊຶມ ແລະ ແລກປ່ຽນກ່ຽວກັບພັນທະຂອງແຕ່ລະພາກສ່ວນເພື່ອຊ່ວຍພັກດັນໃຫ້ເກີດຄວາມຍືນຍົງຂອງປ່າສະຫງວນແຫ່ງນີ້. ກິດຈະກໍາທັງໝົດທີ່ ກຸ່ມອາສາສະໝັກນັກສຶກສາກົດໝາຍລຸ່ນທີ່ສາມຂອງໂຄງການໄລຟ໌ ແມ່ນໄດ້ສອດຄ່ອງກັບແຜນພັດທະນາເສດຖະກິດຂອງບ້ານ ແລະ ແຜນພັດທະນາເສດຖະກິດຂອງເມືອງນໍ້າບາກ. ຍິ່ງໄປກວ່ານັ້ນ, ກິດຈະກໍາດັ່ງກ່າວຍັງໄດ້ຕອບໂຈດ ແລະ ຜັນຂະຫຍາຍແນວທາງ ແລະ ນະໂຍບາຍຂອງພັກ ແລະ ລະບຽບກົດໝາຍຂອງລັດໂດຍສະເພາະແມ່ນຄໍາສັ່ງເລກທີ **11** ຂອງທ່ານນາຍົກກ່ຽວກັບການເພີ່ມຄວາມເຂັ້ມງວດໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາການນໍາໃຊ້ທີ່ດິນ ແລະ ປ່າໄມ້ຄາດໝາຍສູ້ຊົນການສ້າງປ່າປົກຄຸມໃຫ້ກວມ **70%** ໃນທົ່ວເມືອງ. ອີກອັນໜຶ່ງກໍ່ເປັນການປູກຈິດສໍານຶກໃຫ້ພໍ່ແມ່ ປະຊາຊົນຮັບຮູ້ໄດ້ເຖິງຄວາມໝາຍ ຄວາມສໍາຄັນຂອງປ່າໄມ້ພ້ອມນັ້ນກໍ່ຍັງໄດ້ໃຫ້ຊາວບ້ານຮັບຮູ້ຕື່ມວ່າ ການປົກປັກຮັກສາປ່າໄມ້ແມ່ນສິດ ແລະ ພາລະບົດບາດຂອງຊາວບ້ານໝົດທຸກຄົນ ຕະຫຼອດຮອດການຈັດຕັ້ງບ້ານ ແລະ ວິຊາການຈາກຂັ້ນເມືອງ.


ອົງການບ້ານຈຸດສຸມສາກົນ, ບ້ານ ໂພນສະຫວັນໃຕ້, ຮ່ອມ 14, ເຮືອນເລກທີ 207,
ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ໂທ/Tel: +856 021 312 519, ແຟກ/Fax: +856 021 315 841
ເວັບໄຊທ໌/Website: www.villagefocus.org

## 6. ບົດຮຽນທີ່ຖອດຖອນໄດ້

ບົດຮຽນຮູ້ທີ່ຖອດຖອນໄດ້ ຈາກກໍລະນີສຶກສາໃນຄັ້ງນີ້ ມີດັ່ງນີ້:

**1)** ການມີສ່ວນຮ່ວມຂອງຊາວບ້ານ ຕ້ອງຜ່ານເກນມາດຕະຖານ

ໃນການຈັດຕັ້ງປະຕິບັດກິດຈະກຳໃດໜຶ່ງຢູ່ຊຸມຊົນ, ກ່ອນອື່ນໝົດຕ້ອງມີສ່ວນຮ່ວມຂອງຊາວບ້ານ ເຊິ່ງ ທາງໂຄງການໄລຟ໌ ໄດ້ສະແດງໃຫ້ເຫັນຜ່ານຂັ້ນຕອນທຳອິດຈົນຮອດຂັ້ນຕອນສຸດທ້າຍຂອງໂຄງການ ໂດຍ ທີ່ມີ ປະຊາຊົນ, ອົງການຈັດຕັ້ງບ້ານ, ແລະ ຄະນະຈາກເມືອງຮ່ວມເຫັນ ແລະ ຮ່ວມຈັດຕັ້ງປະຕິບັດ ແລະ ນຳພາຮ່ວມກັນ. ນັ້ນກໍ່ຄື ການມີສ່ວນຮ່ວມຂອງປະຊາຊົນ ໃນການເຫັນດີ ເຫັນພ້ອມ ດ້ວຍຄວາມສະໝັກ ໃຈ ໂດຍທີ່ຊາວບ້ານຮັບຮູ້ຂໍ້ມູນລ່ວງໜ້າ ແລະພຽງພໍ. ເຊິ່ງວ່າ ນີ້ກໍ່ແມ່ນໜຶ່ງໃນແນວທາງນະໂຍບາຍ ຂອງພັກ ແລະ ລັດທຸກພາກສ່ວນໃຫ້ຄວາມສຳຄັນ ແລະ ຕ້ອງຜ່ານຂະບວນການດັ່ງກ່າວນີ້ ຈຶ່ງສາມາດສືບ ຕໍ່ກິດຈະກຳ ໃນບ້ານນັ້ນໄດ້ ໂດຍມີພາກສ່ວນລັດຖະບານຂັ້ນທ້ອງຖິ່ນຊ່ວຍພັກດັນ. ດັ່ງຄຳເວົ້າຂອງທ່ານ ສຸລິຍັນ ພົມປະດິດ ວິຊາການ ຈາກຫ້ອງການຊັບ ເມືອງ ນ້ຳບາກ, ແຂວງຫຼວງພະບາງ

**2)** ການປູກຈິດສຳນຶກກ່ຽວກັບກົດໝາຍ ແລະ ຄວາມໝາຍ ຄວາມສຳຄັນຂອງປ່າໄມ້ ແລະ ທີ່ດິນ

ກ່ອນການຈັດຕັ້ງປະຕິບັດກິດຈະກຳຫຼັກ ເຊັ່ນ ການກຳນົດ ແລະ ສ້າງປ່າສະຫງວນຂອງບ້ານ ທາງອາສາສະ ໝັກນັກສຶກສາກົດໝາຍ ກໍ່ໄດ້ປູກຈິດສຳນຶກກ່ຽວກັບຄວາມໝາຍ ຄວາມສຳຄັນຂອງປ່າໄມ້, ແມ່ນ້ຳ ແລະ ຜົນກະທົບຂອງການທຳລາຍປ່າໄມ້ ແລະ ແຫຼ່ງນ້ຳ ເພື່ອໃຫ້ປະຊາຊົນເຂົ້າໃຈ ແລະ ຮັບຮູ້ ກ່ອນທີ່ຊາວບ້ານ ຈະຕັດສິນໃຈວ່າ ຈະເລືອກເຮັດກິດຈະກຳຫຍັງແທ້ ຈຶ່ງຈະມີຄວາມຍືນຍົງຮອດເສັ້ນລູກ ເສັ້ນ ຫຼານ. ແລະ ການປູກຈິດສຳນຶກດັ່ງກ່າວ ກໍ່ໄດ້ຕອບສະໜອງຕາມແນວທາງຂອງພັກ ແລະ ລັດ ໃນການສົ່ງເສີມ ປູກຈິດ ສຳນຶກໃຫ້ແກ່ຊາວບ້ານໃນການອານຸລັກປົກປັກຮັກສາປ່າໄມ້ ແລະການນຳໃຫ້ມີຄວາມຍືນຍົງ. ເຊິ່ງໃນເມື່ອກ່ອນຊາວບ້ານບໍ່ໄດ້ເຊື່ອມຊຶມ ແລະ ບໍ່ໄດ້ພາກັນປົກປັກຮັກສາປ່າໄມ້ ແລະແຫຼ່ງນ້ຳໃນບ້ານ ຫຼັງຈາກທີ່ໄດ້ຮັບການປູກຈິດສຳນຶກແລ້ວ ກໍ່ເຫັນວ່າ ຊາວບ້ານມີຄວາມກະຕືລືລົ້ນ ທີ່ຈະປົກປັກຮັກສາປ່າໄມ້ ແລະ ແຫຼ່ງນ້ຳໃນບ້ານຂອງເຂົາເຈົ້າ. ແລະ ການສ້າງປ່າສະຫງວນຂອງບ້ານ ກໍ່ແມ່ນການເລືອກເອົາ ໂດຍຊາວບ້ານເອງ.

**3)** ຄວາມຍືນຍົງຂອງໂຄງການ

ເນື່ອງຈາກວ່າ ທາງໂຄງການໄລຟ໌ ໄດ້ຈັດຕັ້ງປະຕິບັດກິດຈະກຳບົນພື້ນຖານການມີສ່ວນຮ່ວມຂອງຊາວ ບ້ານ ແລະ ໄດ້ອີງໃສ່ນະໂຍບາຍຂອງພັກ ແລະ ລະບຽບຂອງລັດ ຈຶ່ງເຮັດໃຫ້ການຈັດຕັ້ງປະຕິບັດກິດຈະກຳ ຕ່າງໆ ມີແນວໂນ້ມທີ່ຈະນຳພາໄປສູ່ຄວາມຍືນຍົງ ຫຼັງຈາກສິ້ນສຸດກິດຈະກຳຂອງໂຄງການ. ຍ້ອນວ່າທຸກ ພາກສ່ວນໄດ້ເຫັນເຖິງຄວາມສຳຄັນ ແລະຮັບຮູ້ເຖິງຜົນລະປົດບາດ ແລະ ພັນທະຂອງຕົນໃນການສືບຕໍ່ ປົກປັກຮັກສາປ່າໄມ້ ແລະ ພັດທະນານຳໃຊ້ທີ່ດິນຕາມແຜນງານ ແລະ ນະໂຍບາຍຂອງລັດ ໂດຍສະເພາະ ແມ່ນ ຄຳສັ່ງເລກທີ **11** ຂອງທ່ານນາຍົກກ່ຽວກັບການເພີ່ມຄວາມເຂັ້ມງວດໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາການນຳໃຊ້ທີ່ດິນ ແລະ ປ່າໄມ້ຄາດໝາຍສູ້ຊົນການສ້າງປ່າປົກຄຸມໃຫ້ກວມ **70%** ໃນທົ່ວເມືອງ.



ອົງການບ້ານຈຸດສຸມສາກົນ, ບ້ານ ໂພນສະຫວັນໃຕ້, ຮ່ອມ 14, ເຮືອນເລກທີ 207,
ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ໂທ/Tel: +856 021 312 519, ແຟກ/Fax: +856 021 315 841
ເວັບໄຊທ໌/Website: www.villagefocus.org

## 7. ຂໍ້ສະເໜີສຳລັບຂັ້ນຕອນຕໍ່ໄປ

ຜ່ານການສັງເກດການ, ຜ່ານການໂອ້ລົມນຳກຸ່ມເປົ້າໝາຍພາຍໃນບ້ານນາຍາງໃຕ້ ແລະ ວິຊາການຈາກຂັ້ນເມືອງ ພ້ອມກັບການສົນທະນາແລກປ່ຽນນຳກຸ່ມອາສາສະໝັກນັກສຶກສາກົດໝາຍຈາກໂຄງການໄລຟ໌ ແລະ ຮັບຟັງຂໍ້ສະເໜີຈາກຫຼາຍພາກສ່ວນ, ດັ່ງນັ້ນຈຶ່ງມີຂໍ້ສະເໜີບາງອັນໃຫ້ກັບທາງໂຄງການໄລຟ໌ ສຳລັບກິດຈະກຳໃນ ອານາ ຄົດ ເພື່ອສືບຕໍ່ຈາກຄວາມຍືນຍົງ ແລະ ຈາກການປະຕິບັດທີ່ດີ ຜ່ານການເຮັດກິດຈະກຳຂອງກຸ່ມອາສາສະໝັກນັກສຶກສາກົດໝາຍຂອງໂຄງການມີດັ່ງນີ້:

- ສືບຕໍ່ການປູກຈິດສຳນຶກກ່ຽວກັບການປົກປັກຮັກສາຊັບພະຍາກອນປ່າໄມ້, ປົກປັກຮັກສາສິ່ງແວດລ້ອມ ແລະ ປົກປັກຮັກສາແຫຼ່ງນ້ຳໂດຍການເຊື່ອມໂຍງກົດໝາຍທີ່ກ່ຽວຂ້ອງ ແລະ ສືບຕໍ່ສະໜັບສະໜູນຊ່ວຍເຫຼືອກິດຈະກຳສ້າງປ່າສະຫງວນຢູ່ບ້ານທີ່ຍັງມີຄວາມຕ້ອງການ ໂດຍສະເພາະແມ່ນບ້ານທີ່ນອນຢູ່ໃນເມືອງນ້ຳບາກ ເພື່ອສືບຕໍ່ຜັນຂະຫຍາຍນະໂຍບາຍຂອງລັດ ເພາະວ່ານີ້ແມ່ນໜຶ່ງໃນແນວທາງຂອງລັດຖະບານ ເພື່ອຜັນຂະຫຍາຍແນວທາງໃນການຄຸ້ມຄອງ, ນຳໃຊ້ປ່າໄມ້ ແລະ ທີ່ດິນໃຫ້ມີ ຄວາມຍືນຍົງ ແລະ ເພີ່ມເນື້ອທີ່ປ່າໄມ້ໃນແຕ່ລະເມືອງ.
- ສ້າງເຄືອຄ່າຍລະຫວ່າງບ້ານ ໃນການປົກປັກຮັກສາປ່າໄມ້ ແລະ ຊັບພະຍາກອນທຳມະຊາດ ພ້ອມກັບການຮັບຮູ້ກ່ຽວກັບກົດໝາຍປ່າໄມ້, ກົດໝາຍທີ່ດິນ ແລະ ກົດໝາຍກ່ຽວກັບສິ່ງແວດລ້ອມ. ໂດຍໃຫ້ຊາວບ້ານຈາກບ້ານນາຍາງໃຕ້ທີ່ມີປະສົບການ ແລະ ມີຄວາມພ້ອມ ແລະ ຄະນະກຳມະການຄຸ້ມຄອງປ່າສະຫງວນຂອງບ້ານນາຍາງໃຕ້ ມາແລກປ່ຽນການປະຕິບັດທີ່ດີ ທີ່ຜ່ານການເຮັດກິດຈະກຳຂອງອາສາສະໝັກນັກສຶກສາກົດໝາຍຈາກໂຄງການໄລຟ໌ ເພື່ອຊ່ວຍສະໜັບສະໜູນໃຫ້ບ້ານອື່ນເຮັດປ່າສະຫງວນຂອງບ້ານ.
- ຈັດກິດຈະກຳຢາມບ້ານຂອງອາສາສະໝັກນັກສຶກສາກົດໝາຍ ເພື່ອໃຫ້ກຸ່ມອາສາສະໝັກໄດ້ກັບຄືນໄປບ້ານນາຍາງໃຕ້ ແລະ ນຳໃຊ້ທັກສະການປະເມີນຄືນກິດຈະກຳທີ່ເຂົາເຈົ້າໄດ້ຈັດຕັ້ງປະຕິບັດຜ່ານມາ ເພື່ອໃຫ້ອາສາສະໝັກໄດ້ຮຽນຮູ້ວິທີການທີ່ຫຼາກຫຼາຍຈາກໂຄງການໄລຟ໌ ໂດຍສະເພາະແມ່ນທັກສະການປະເມີນຄືນກິດຈະກຳທີ່ເຮັດຜ່ານມາ ໃຫ້ເຂົາເຈົ້າໄດ້ຮັບຮູ້ຕ່ອງໂຊ້ ການວິເຄາະບັນຫາ, ແກ້ໄຂບັນຫາ ແລະ ປະເມີນຄືນວ່າບັນຫາດັ່ງກ່າວຖືກແກ້ໄຂໄດ້ຄືແນວໃດ ແລະ ໃນອະນາຄົດເຂົາເຈົ້າສາມາດສືບຕໍ່ແກ້ໄຂບັນຫານັ້ນໄດ້ບໍ ຫຼືເກັບກຳເອົາ ການປະຕິບັດທີ່ດີ ເພື່ອນຳໄປແລກປ່ຽນກັບບ້ານອື່ນໃນທົ່ວປະເທດລາວ.
- ສະເໜີຈັດຝຶກອົບຮົມ ວິທີການເປັນຜູ້ອຳນວຍຄວາມສະດວກໂດຍຄັດເລືອກເອົາແຕ່ເຄື່ອງມືທີ່ພົວພັນໃນຫົວຂໍ້ ກ່ຽວກັບການກຳນົດ ແລະ ສ້າງປ່າສະຫງວນຂອງບ້ານ ໃຫ້ກັບວິຊາການຂັ້ນເມືອງຮ່ວມກັບຄະນະກຳມະການຄຸ້ມຄອງປ່າໄມ້ບ້ານຈາກບ້ານເປົ້າໝາຍໃໝ່ທີ່ທາງເມືອງນ້ຳບາກຢາກເຮັດການກຳນົດ ແລະ ສ້າງປ່າສະຫງວນຂອງບ້ານ.